**ເອກະສານ ໂຄສະນາ-ປາຖະກະຖາ**

**ວັນຊາດແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ຄົບຮອບ 81 ປີ**

(2 ກັນຍາ 1945-2 ກັນຍາ 2026)

**I. ຄວາມໝາຍ ຂອງການປະຕິວັດເດືອນ ສິງຫາ ປີ 1945 ຢູ່ ຫວຽດນາມ.**

**1. ສະພາບການທາງປະຫວັດສາດ.**

**- ສະພາບກາບ ຂອງໂລກ:** ເຂົ້າສູ່ໄລຍະທ້າຍ ຂອງສົງຄາມໂລກ ຄັ້ງທີ 2.

+ ຕົ້ນເດືອນສິງຫາ ປີ 1945, ກອງທັບສຳພັນທະມິດໄດ້ສຸມກຳລັງບຸກໂຈມຕີກອງທັບຍີ່ປຸ່ນ ຢູ່ພາກພື້ນອາຊີ-ປາຊີຟິກຢ່າງຕໍ່ເນື່ອງ. ໃນວັນທີ 06 ແລະ 09 ສິງຫາ 1945, ສ. ອາເມລິກາ ໄດ້ຖິ້ມລະເບີດປະລະມານູລົງໃສ່ເມືອງ Hiroshima ແລະ Nagasaki ຂອງຍີ່ປຸ່ນ.

+ ເວລາດຽວກັນນັ້ນ, ກອງທັບແດງ ຂອງສະຫະພາບໂຊວຽດ ກໍ່ບຸກໂຈມຕີ, ທຳລາຍລ້າງກອງທັບຂັນໂຕ ຂອງຍີ່ປຸ່ນ ຢູ່ພາກຕາເວັນອອກສຽງເໜືອ ຂອງຈີນ.

+ ໃນວັນທີ 15 ສິງຫາ 1945, ຈັກກະພັດຍີ່ປຸ່ນໄດ້ປະກາດຍອມຈຳນົນ ຕໍ່ຝ່າຍພັນທະມິດໂດຍ ບໍ່ມີເງື່ອນໄຂ, ເຮັດໃຫ້ສົງຄາມໂລກຄັ້ງທີ 2 ສິ້ນສຸດລົງ.

**- ສະພາບການພາຍໃນປະເທດ:**

+ ກອງທັບຍີ່ປຸ່ນອ່ອນແອລົງ, ລັດຖະບານ ເຈິນ ຈ້ອງ ກິມ ຫວາດຫວັ່ນ, ສັບສົນວຸ້ນວາຍ.

+ ພັກກອມມູນິດອິນດູຈີນ ໄດ້ມີການກະກຽມແນວທາງ ແລະ ວິທີຕໍ່ສູ້ຢ່າງຄົບຖ້ວນ; ກຳລັງປະຕິວັດໄດ້ຮັບການກໍ່ສ້າງ ແລະ ຝຶກຝົນຜ່ານການປະຕິບັດຕົວຈິງ, ໂດຍສະເພາະ ແມ່ນການຕໍ່ສູ້ຕ້ານຍີ່ປຸ່ນ ເພື່ອກອບກູ້ປະເທດຊາດ (ມີນາ 1945).

+ ຢູ່ຫຼາຍທ້ອງຖິ່ນ, ມວນຊົນປະຕິວັດພ້ອມແລ້ວທີ່ຈະລຸກຮືຂຶ້ນເມື່ອມີໂອກາດ.

**2. ການຜັນແປ.**

ວັນທີ 09 ມີນາ 1945, ຟາດຊິດຍີ່ປຸ່ນໄດ້ເຂົ້າມາແຊກແຊງ ແລະ ກໍ່ລັດຖະປະຫານເພື່ອໂຄ່ນລົ້ມອຳນາດ ຂອງພວກລ່າເມືອງຂຶ້ນຝຣັ່ງໃນອິນດູຈີນ. ເຊິ່ງສັດຕູ ຂອງການປະຕິວັດຫວຽດນາມ ໃນເວລານີ້ແມ່ນພວກຟາດຊິດຍີ່ປຸ່ນ.

ວັນທີ 12 ມີນາ 1945, ຄະນະປະຈຳສູນກາງພັກໄດ້ອອກຄຳສັ່ງ ຍີ່ປຸ່ນ-ຝຣັ່ງຕໍ່ສູ້ກັນ ແລະ ການເຄື່ອນໄຫວ ຂອງພວກເຮົາ, ລິເລີ່ມຂະບວນການຕໍ່ຕ້ານຍີ່ປຸ່ນ ເພື່ອກອບກູ້ປະເທດຊາດ. ຂະບວນການທຳລາຍສາງເຂົ້າ ຂອງຍີ່ປຸ່ນ ແລະ ແກ້ໄຂບັນຫາອຶດຫິວບໍ່ພຽງແຕ່ມີຄວາມໝາຍດ້ານເສດຖະກິດເທົ່ານັ້ນ ແຕ່ຍັງມີຄວາມໝາຍທາງດ້ານການເມືອງອີກດ້ວຍ.

ພາຍຫຼັງວັນທີ 09 ມີນາ 1945, ຝ່າຍຫວຽດມິງ ໄດ້ນຳພາປະຊາຊົນລຸກຮືຂຶ້ນໃນຫຼາຍທ້ອງຖິ່ນ ໂດຍ

ສະເພາະ ພາກເໜືອ ແລະ ພາກກາງ ຂອງຫວຽດນາມ. ຢູ່ຫວຽດນາມເໜືອ, ກອງທັບປົດປ່ອຍ ແລະ ກອງທັບກູ້ຊາດ ໄດ້ເຄື່ອນໄຫວຕໍ່ສູ້ແບບກອງຫຼອນ ເພື່ອເປີດກວ້າງເຂດຖານທີ່ໝັ້ນ.

ວັນທີ 16 ເມສາ 1945, ຝ່າຍຫວຽດມິງ ໄດ້ອອກຄໍາສັ່ງວ່າດ້ວຍການສ້າງຕັ້ງຄະນະກໍາມາທິການກອບກູ້ຊາດໃນທຸກຂັ້ນ. ວັນທີ 15 ພຶດສະພາ 1945, ກອງທັບປົດປ່ອຍ ແລະ ກອງທັບກູ້ຊາດໄດ້ເອກະ ພາບກັນຣວມເຂົ້າເປັນກອງທັບປົດປ່ອຍຫວຽດນາມ. ວັນທີ 04 ມິຖຸນາ 1945, ເຂດປົດປ່ອຍຫວຽດນາມເໜືອໄດ້ຮັບການສ້າງຕັ້ງຂຶ້ນ.

ວັນທີ 08 ພຶດສະພາ 1945, ໄຊຊະນະ ຂອງສະຫະພາບໂຊວຽດ ໄດ້ບັງຄັບໃຫ້ນາຊີເຢຍລະມັນຍອມຈໍານົນ ຕໍ່ບັນດາປະເທດສໍາພັນທະມິດ. ໃນອາຊີ, ວັນທີ 14 ສິງຫາ 1945, ຟາດຊິດຍີ່ປຸ່ນ ກໍ່ຕ້ອງຍອມຈໍານົນ. ໃນເວລາດັ່ງກ່າວ, ວັນທີ 13 ສິງຫາ 1945, ກອງປະຊຸມພັກທົ່ວປະເທດ ໄດ້ໄຂຂຶ້ນ ຢູ່ເມືອງເຕີນຈ່າວ, ແຂວງ ຕວຽນກວາງ ແລະ ໄດ້ຕົກລົງສ້າງຕັ້ງຄະນະກໍາມະການລຸກຮືຂຶ້ນທົ່ວປະເທດ. ຈາກນັ້ນ, ວັນທີ 16 ສິງຫາ, ກອງປະຊຸມໃຫຍ່ແຫ່ງຊາດໄດ້ມີການສ້າງຕັ້ງຄະນະກໍາມະການປົດປ່ອຍຊາດຫວຽດນາມ ໂດຍມີ ທ່ານໂຮ່ຈິມິນ ເປັນປະທານ.

ອີງຕາມທິດຊີ້ນໍາ ຂອງພັກ, ນັບແຕ່ວັນທີ 14 ສິງຫາ 1945, ໃນຫຼາຍທ້ອງຖິ່ນໄດ້ກຽມພ້ອມລຸກຮືຂຶ້ນຍຶດອໍານາດ. ວັນທີ 19 ສິງຫາ 1945, ໄດ້ເກີດການລຸກຮືຂຶ້ນ ຢູ່ຮ່າໂນ້ຍ, ວັນທີ 23 ສິງຫາ 1945 ຢູ່ນະຄອນເຫ້ວ, ແລະ ວັນທີ 25 ສິງຫາ 1945 ຢູ່ນະຄອນໄຊ່ງ່ອນ. ພາຍໃນສອງອາທິດນັບແຕ່ວັນທີ 14 ຫາວັນທີ 28 ສິງຫາ 1945, ການລຸກຮືຂຶ້ນທົ່ວປວງຊົນ ຂອງປະຊາຊົນຫວຽດນາມ ໄດ້ຮັບໄຊຊະນະຢ່າງເດັດຂາດ, ໂຄ່ນລົ້ມລະບອບອະນານິຄົມ ແລະ ລະບອບສັກດີນາ.

ວັນທີ 27 ສິງຫາ 1945, ຄະນະກໍາມະການປົດປ່ອຍຊາດໄດ້ຮັບການປະຕິຮູບປ່ຽນເປັນລັດຖະບານປະຕິວັດຊົ່ວຄາວ. ວັນທີ 29 ສິງຫາ 1945, ບັນຊີລາຍຊື່ສະມາຊິກລັດຖະບານໄດ້ປະກາດລົງໃນໜັງສືພິມ ຢູ່ຮ່າໂນ້ຍຫຼາຍສະບັບ, ລວມມີ 15 ທ່ານ, ໂດຍມີປະທານ ໂຮ່ຈິມິນ ເປັນຜູ້ນໍາ.

ວັນທີ 02 ກັນຍາ ປີ 1945 ຢູ່ສະໜາມຫຼວງບາດິ່ງ, ນະຄອນຫຼວງຮ່າໂນ້ຍ, ປະທານ ໂຮ່ຈິມິນ ໄດ້ອ່ານຖະແຫຼງການປະກາດເອກະລາດ, ສິດເສລີພາບ ແລະ ຄວາມສະເໝີພາບ ຂອງຊາດ ຫວຽດນາມ ຕໍ່ທົ່ວໂລກວ່າ: "ຫວຽດນາມມີສິດທີ່ເສລີພາບ, ເອກະລາດ ແລະ ເປັນປະເທດເສລີພາບ, ເອກະລາດ. ປະຊາຊົນຊາດຫວຽດນາມທຸກຄົນໄດ້ອຸທິດຈິດໃຈ, ກໍາລັງ, ຊີວິດ ແລະ ຊັບສິນທັງໝົດ ເພື່ອຄວາມເປັນເອກະລາດ ແລະ ສິດທິເສລີພາບ ຂອງຕົນ." ປະເທດສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ໄດ້ກໍາເນີດຂຶ້ນ ເປັນຂີດໝາຍຈຸດເລີ່ມຕົ້ນ ຂອງຍຸກສະໄໝ ຂອງປະເທດຊາດ: ແມ່ນຍຸກແຫ່ງເອກະລາດ, ເສລີພາບ ແລະ ເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ.

**3. ສາເຫດທີ່ພາໃຫ້ມີໄຊຊະນະ.**

ຜົນສໍາເລັດ ຂອງການປະຕິວັດເດືອນ ສິງຫາ ປີ 1945 ແມ່ນໝາກຜົນ ຂອງການສົມທົບກັນ ຂອງ

ຫຼາຍປັດໃຈ, ໂດຍສະເພາະ ແມ່ນການສົມທົບກັນຢ່າງແໜ້ນແຟ້ນ ຂອງບັນດາກາລະໂອກາດທີ່ສະດວກທາງປະຫວັດສາດ ດ້ວຍການກຽມພ້ອມຢ່າງລະອຽດ, ເປັນລະບົບ ແລະ ການນຳພາອັນສະຫຼາດສ່ອງໃສ ຂອງພັກກອມມູນິດອິນດູຈີນ ໂດຍມີປະທານ ໂຮ່ຈິມິນ ເປັນຜູ້ນຳ.

ໄຊຊະນະດັ່ງກ່າວເກີດຈາກການນຳພາທີ່ຖືກຕ້ອງ ແລະ ທັນການ ຂອງພັກ. ແນວທາງປະຕິວັດຊາດ, ປະຊາທິປະໄຕ ປະຊາຊົນ ທີ່ພັກໄດ້ກຳນົດແມ່ນສອດຄ່ອງກັບຄວາມມຸ່ງມາດປາຖະໜາ ຂອງປະຊາຊົນສ່ວນໃຫຍ່. ພັກໄດ້ສະແດງໃຫ້ເຫັນວິໄສທັດຍຸດທະສາດ ແລະ ຄວາມສາມາດໃນການຈັດຕັ້ງປະຕິບັດທີ່ດີເລີດ ໄດ້ຊີ້ນຳທົ່ວປວງຊົນລຸກຂຶ້ນໃນເວລາອັນເໝາະສົມ, ຍຶດເອົາອຳນາດໃນທົ່ວປະເທດຄືນຢ່າງວ່ອງໄວດ້ວຍຈິດໃຈ:" *ເຖິງວ່າຈະຕ້ອງຈູດເຜົາທົ່ວທັງສາຍພູຫຼວງກໍ່ຕາມ, ແຕ່ຕ້ອງເດັດດ່ຽວຍາດເອົາເອກະລາດຄືນມາໃຫ້ໄດ້*".

ໄຊຊະນະ ຂອງການປະຕິວັດເດືອນ ສິງຫາ ແມ່ນໝາກຜົນ ຂອງຂະບວນການກະກຽມທີ່ຍາວນານ ແລະ ຮອບດ້ານ ທາງການເມືອງ, ການຈັດຕັ້ງ, ອຸດົມການ ແລະ ກຳລັງປະກອບອາວຸດ. ເລີ່ມຈາກຂະບວນການໂຊວຽດ ເຫງະຕິ້ງ, ບັນດາການເຄື່ອນໄຫວເພື່ອປະຊາທິປະໄຕ, ຂະບວນການຕໍ່ຕ້ານຍີ່ປຸ່ນຕະຫຼອດຮອດການສ້າງຕັ້ງແນວໂຮມຫວຽດມິງ, ການຈັດຕັ້ງກຳລັງປະກອບອາວຸດ, ກໍ່ສ້າງຖານທີ່ໝັ້ນ, ເສີມຂະຫຍາຍກຳລັງມະຫາຊົນ... ພັກໄດ້ສຸມໃສ່ກະກຽມຄວາມພ້ອມເພື່ອຍາດແຍ່ງເອົາໂອກາດ. ການລິເລີ່ມເພື່ອການລຸກຮືຂຶ້ນໃນແຕ່ລະຂັ້ນຕອນ ກ່ອນຂະບວນການລຸກຮືຂຶ້ນ ທັງໝົດແມ່ນສະແດງໃຫ້ເຫັນເຖິງໄຫວພິບ ແລະ ຄວາມສະຫຼາດຫຼັກແຫຼມໃນການຊີ້ນຳ-ນຳພາການປະຕິວັດ.

ໄຊຊະນະ ຂອງການປະຕິວັດເດືອນ ສິງຫາ ແມ່ນໝາກຜົນແຫ່ງນ້ຳໃຈຮັກຊາດ, ມູນເຊື້ອຄວາມບໍ່ຍອມຈຳນົນ ແລະ ຄວາມປາຖະໜາອັນແຮງກ້າເພື່ອເອກະລາດ ແລະ ເສລີພາບ ຂອງປະຊາຊົນຫວຽດນາມທົ່ວປວງຊົນ. ຊາວຫວຽດນາມ, ພາຍໃຕ້ຍອດທຸງຄວາມສາມັກຄີ ຂອງແນວໂຮມຫວຽດມິງ ຄວາມເປັນກະພາບໄດ້ລຸກຮືຂຶ້ນ ຢູ່ທົ່ວທັງ 3 ພາກ ຂອງຫວຽດນາມ, ຈາກເຂດທົ່ງພຽງເຖິງເຂດພູດອຍ, ຈາກຕົວເມືອງສູ່ຊົນນະບົດ, ຈາກແຜ່ນດິນໃຫຍ່ເຖິງໝູ່ເກາະ. ນີ້ແມ່ນການສະແດງໃຫ້ເຫັນເຖິງຄວາມເຂັ້ມແຂງ ຂອງຄວາມສາມັກຄີອັນໃຫຍ່ຫຼວງ ຂອງຊາດ, ເປັນປັດໄຈອັນເດັດດ່ຽວຕັດສິນຕໍ່ໄຊຊະນະ ຂອງການປະຕິວັດ.

ໄຊຊະນະ ຂອງການປະຕິວັດເດືອນ ສິງຫາ ໄດ້ດຳເນີນໄປໃນສະພາບທີ່ສົງຄາມໂລກ ຄັ້ງທີ 2 ໄດ້ສິ້ນສຸດລົງ ດ້ວຍຄວາມປະລາໄຊ ຂອງນາຊີເຢຍລະມັນ ແລະ ຟາດຊິດຍີ່ປຸ່ນ. ພັກກອມມູນິດອິນດູຈີນ ໄດ້ຕີລາຄາຢ່າງຖືກຕ້ອງກ່ຽວກັບໂອກາດ "ໜຶ່ງພັນປີຈະມີເທື່ອໜຶ່ງ" ແລະ ການປຸກລະດົມລຸກຮືຂຶ້ນເພື່ອຍຶດອຳນາດໃນທົ່ວປະເທດ.

4. **ຄວາມໝາຍທາງປະຫວັດສາດ.**

ຜົນສຳເລັດ ຂອງການປະຕິວັດເດືອນ ສິງຫາ ປີ 1945 ໄດ້ເປັນບາດລ້ຽວໃຫຍ່ໃນປະຫວັດສາດຂອງຊາດຫວຽດນາມ. ໄຊຊະນະດັ່ງກ່າວ ໄດ້ທຳລາຍຕ່ອງໂສ້ການເປັນຂ້າທາດ ຂອງພວກລ່າເມືອງຂຶ້ນຝຣັ່ງເປັນເວລາຫຼາຍກວ່າ 81 ປີ, ການຍຶດຄອງ ຂອງພວກຟາດຊິດຍີ່ປຸ່ນ ແລະ ໄດ້ໂຄ່ນລົ້ມລະບອບສັກດີນາທີ່

ປົກຄອງມາເປັນເວລາຫຼາຍສັດຕະວັດ, ນຳໄປສູ່ການກຳເນີດ ຂອງປະເທດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ເຊິ່ງເປັນລັດທີ່ນຳພາໂດຍຊົນຊັ້ນຜູ້ອອກແຮງງານ.

ໄຊຊະນະການປະຕິວັດເດືອນ ສິງຫາ ແມ່ນຂີດໝາຍແຫ່ງການພັດທະນາບາດກ້າວອັນໃຫ່ຍຫຼວງ ຂອງການປະຕິວັດຫວຽດນາມ, ເລີ່ມຕົ້ນຍຸກສະໄໝໃໝ່ ຂອງຊາດ: ຍຸກແຫ່ງເອກະລາດ ແລະ ເສລີພາບ; ຍຸກແຫ່ງຊົນຊັ້ນກຳມະກອນ ຜູ້ອອກແຮງງານເປັນຜູ້ມີສິດອຳນາດ, ປົກຄອງປະເທດ, ຕັດສິນຊະຕາກຳ ຂອງຊາດ; ຍຸກສະໄໝແຫ່ງເອກະລາດ ຂອງຊາດ ທີ່ຕິດພັນກັບລະບອບສັງຄົມນິຍົມ.

ດ້ວຍໄຊຊະນະ ຂອງການປະຕິວັດເດືອນ ສິງຫາ, ພັກກອມມູນິດຫວຽດນາມ ກາຍເປັນພັກດຽວ ທີ່ມີອຳນາດ ແລະ ກະກຽມບັນດາເງື່ອນໄຂໃຫ້ແກ່ບັ້ນໄຊຊະນະ ຂອງຊາດໃນຕໍ່ໜ້າ.

ການປະຕິວັດເດືອນ ສິງຫາ ບໍ່ພຽງແຕ່ມີຄວາມໝາຍຄວາມສຳຄັນ ຕໍ່ປະຫວັດສາດຫວຽດນາມເທົ່ານັ້ນ, ແຕ່ຍັງມີຄວາມໝາຍອັນເລິກເຊິ່ງແຫ່ງຍຸກສະໄໝ ຂອງສາກົນອີກດ້ວຍ. ໄຊຊະນະດັ່ງກ່າວ ໄດ້ກາຍເປັນແຮງພັກດັນອັນແຮງກ້າໃຫ້ບັນດາປະເທດອະນານິຄົມ ແລະ ທີ່ຖືກກົດຂີ່ຂູດຮີດໃນທົ່ວໂລກ ໄດ້ລຸກຮືຂຶ້ນຕໍ່ສູ້ ເພື່ອເອກະລາດ, ເສລີພາບ, ປະຊາທິປະໄຕ ແລະ ການພັດທະນາ ຂອງສັງຄົມ. ດ້ວຍໄຊຊະນະດັ່ງກ່າວ, ຊາດຫວຽດນາມ ບໍ່ພຽງແຕ່ຍາດໄດ້ເອກະລາດເທົ່ານັ້ນ ແຕ່ຍັງເປັນການຢືນຢັນຫຼັກໝັ້ນ ແລະ ເສັ້ນທາງພັດທະນາ ຂອງຕົນ ໃນຂະບວນວິວັດທະນາການ ຂອງປະຫວັດສາດໂລກຍຸກໃໝ່ອີກດ້ວຍ.

**II. ຜົນງານ 81 ປີ ແຫ່ງການກໍ່ສ້າງ, ປົກປັກຮັກສາ ແລະ ພັດທະນາປະເທດຊາດ ຫວຽດນາມ.**

**1. ໄຊຊະນະອັນໃຫຍ່ຫຼວງໃນການຕໍ່ສູ້ປົດປ່ອຍຊາດ, ທ້ອນໂຮມປະເທດຊາດ, ປ້ອງກັນປະເທດ, ປະຕິບັດພັນທະສາກົນ.**

ພາຍຫຼັງໄຊຊະນະອັນສະຫງ່າລາສີ ຂອງການປະຕິວັດເດືອນ ສິງຫາປີ 1945, ປະເທດສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ໄດ້ກຳເນີດຂຶ້ນໃນສະພາບການທີ່ຫຍຸ້ງຍາກ ແລະ ທ້າທາຍ. ລັດຖະບານຍັງບໍ່ມີປະສົບການຕ້ອງພົບກັບຄວາມຫຍຸ້ງຍາກ ແລະ ໄພອັນຕະລາຍນັບບໍ່ຖ້ວນ, ປະເຊີນໜ້າກັບສະພາບ "ຄືດັ່ງນໍ້າໜັກພັນກິໂລຖ່ວງເສັ້ນຜົມ" ສັດຕູທັງພາຍໃນ ແລະ ພາຍນອກ. ໃນສະພາບການດັ່ງກ່າວ, ພາຍໃຕ້ການຊີ້ນຳ-ນຳພາໂດຍກົງ, ຢ່າງສະຫຼາດສ່ອງໃສ, ກ້າຫານ ຂອງພັກ ແລະ ປະທານ ໂຮ່ຈີມິນ, ປະຊາຊົນຫວຽດນາມທົ່ວປວງຊົນມີຄວາມສາມັກຄີເປັນນໍ້າໜຶ່ງໃຈດຽວ, ເພີ່ມທະວີນໍ້າໃຈການເປັນເຈົ້າຕົນເອງ, ເຂັ້ມແຂງ, ມີສະຕິປັນຍາປະດິດສ້າງ, ຜ່ານຜ່າທຸກຄວາມຫຍຸ້ງຍາກໃນປະຫວັດສາດ.

ໃນໄລຍະປີ 1945-1946, ພັກ ແລະ ປະທານ ໂຮ່ຈີມິນ ໄດ້ນຳພາທົ່ວປວງຊົນປະຕິບັດ 2 ໜ້າທີ່ຄື: ກໍ່ສ້າງອຳນາດການປົກຄອງປະຕິວັດ ແລະ ປົກປັກຮັກສາບັນດາໝາກຜົນ ຂອງການປະຕິວັດ ເດືອນສິງຫາ. ການເລືອກຕັ້ງໃຫຍ່ ໃນວັນທີ 06 ມັງກອນ 1946 ໄດ້ຈັດຂຶ້ນດ້ວຍຜົນສຳເລັດຢ່າງຈົບງາມ, ສະພາແຫ່ງຊາດສະໄໝທຳອິດໄດ້ກຳເນີດຂຶ້ນ; ລັດຖະທຳມະນູນປະຊາທິປະໄຕສະບັບທຳອິດ ໄດ້ຮັບການປະກາດໃຊ້; ລັດຖະບານປະຕິວັດໄດ້ຮັບການປັບປຸງຢ່າງບໍ່ຢຸດຢັ້ງ; ບັນດາຂະບວນການລົບລ້າງໄພກົກໜັງສື, "ໄພອຶດ

ຫົວ", "ໄພໂງ່ຈ້າ", "ສັດຕູຜູ້ຮຸກຮານ" ໄດ້ຮັບການປຸກລະດົມຢ່າງຟົດຟື້ນ; ກໍາລັງຝືນນການປະຕິວັດຖືກສະກັດກັ້ນ. ຕໍ່ໜ້າແຜນການຮຸກຮານ ຄັ້ງທີ 2 ຂອງພວກລ່າເມືອງຂຶ້ນຝຣັ່ງ, ໃນຄືນວັນທີ 19 ທັນວາ 1946, ປະທານ ໂຮ່ຈີມິນ ຕາງໜ້າຄະນະບໍລິຫານງານສູນກາງພັກ ແລະ ລັດຖະບານ ໄດ້ອອກຖະແຫຼງການ "ຮຽກຮ້ອງໃຫ້ປະເທດຊາດຕໍ່ຕ້ານ" ດ້ວຍຄວາມເດັດດ່ຽວວ່າ: "ພວກເຮົາຍອມເສຍສະຫຼະທຸກສິ່ງທຸກຢ່າງ ດີກວ່າຈະຍອມເສຍປະເທດຊາດ ຫຼື ຕົກເປັນຂ້າທາດ".

ດ້ວຍແນວທາງນະໂຍບາຍ ຕໍ່ສູ້ທົ່ວປວງຊົນ, ຮອບດ້ານ, ສົມທົບການຕໍ່ສູ້ທາງການທະຫານ, ການເມືອງ, ການທູດ, ທັງຕໍ່ສູ້ ແລະ ກໍ່ສ້າງປະເທດຊາດ, ພັກໄດ້ນໍາພາປະຊາຊົນຫວຽດນາມ ຍາດເອົາໄຊຊະນະທາງຍຸດທະສາດ ຂອງພວກລ່າເມືອງຂຶ້ນຝຣັ່ງເທື່ອລະກ້າວ. ພົ້ນເດັ່ນທີ່ສຸດ ແມ່ນບັ້ນຮົບໄຊຊະນະດຽນບຽນຟູ້ ປີ 1954 ເປັນວິລະກໍາວິລະຊົນອັນຍິ່ງໃຫຍ່, "ມີຊື່ສຽງໂດ່ງດັງໄປທົ່ວ 5 ທະວີບ, ສັ່ນສະເທືອນ ໄປທົ່ວໂລກ", ເຊິ່ງບັງຄັບໃຫ້ລັດຖະບານຝຣັ່ງ ຕ້ອງລົງນາມໃນສົນທິສັນຍາເຊີແນວ, ຮັບຮູ້ສິດພື້ນຖານແຫ່ງຊາດ ຂອງປະຊາຊົນຊາດຫວຽດນາມ, ແລະ ໄດ້ສິ້ນສຸດສົງຄາມຕໍ່ຕ້ານລະບອບລ່າເມືອງຂຶ້ນຝຣັ່ງເປັນ ເວລາ 9 ປີ ແລະ ການແຊກແຊງ ຂອງອາເມລິກາ.

ເຖິງຢ່າງໃດກໍຕາມ, ຫຼັງຈາກນັ້ນພວກຈັກກະພັດອາເມລິກາ ໄດ້ເຂົ້າແຊກແຊງພາກໃຕ້ ຂອງຫວຽດນາມຢ່າງຮຸນແຮງ, ປະຕິບັດແຜນການແບ່ງແຍກຫວຽດນາມຢ່າງຖາວອນ ແລະ ຫັນຫວຽດນາມໃຕ້ເປັນຫົວເມືອງຂຶ້ນແບບໃໝ່. ຕໍ່ສະພາບການດັ່ງກ່າວ, ພາຍໃຕ້ການນໍາພາ ຂອງພັກ ແລະ ປະທານ ໂຮ່ຈີມິນ, ທົ່ວພັກ, ທົ່ວປວງຊົນ ແລະ ກອງທັບຫວຽດນາມ ໄດ້ປະຕິບັດ 2 ໜ້າທີ່ຍຸດທະສາດຄື: ການປະຕິວັດສັງຄົມນິຍົມ ຢູ່ພາກເໜືອ ສ້າງກໍາລັງແນວຫຼັງທີ່ເຂັ້ມແຂງໃຫ້ທົ່ວປະເທດ ແລະ ການປະຕິວັດປະຊາທິປະໄຕ ຢູ່ພາກໃຕ້ ຕໍ່ສູ້ປົດປ່ອຍພາກໃຕ້ ແລະ ທ້ອນໂຮມປະເທດຊາດເປັນເອກະພາບ. ສົງຄາມຕໍ່ສູ້ກູ້ຊາດຕ້ານ ຈັກກະພັດອາເມລິກາ, ແມ່ນວິລະກໍາວິລະຊົນ ຂອງຊາວຫວຽດນາມ ໃນສະຕະວັດທີ 20. ຜ່ານເວລາ 21 ປີທີ່ຍາວນານ, ລໍາບາກ ແລະ ອົງອາດກ້າຫານ (ແຕ່ປີ 1954 -1975), ພັກກອມມູນິດຫວຽດນາມ ໄດ້ນໍາພາປະຊາຊົນສອງພາກ ຂອງປະເທດຍາດແຍ່ງເອົາໄຊຊະນະທາງຍຸດທະສາດ ແລະ ສົງຄາມຈາກພວກຈັກກະພັດອາເມລິກາເທື່ອລະກ້າວ. ຫວຽດນາມເໜືອທັງໄດ້ຕໍ່ສູ້ກັບສົງຄາມທໍາລາຍມ້າງ, ພ້ອມທັງພະຍາຍາມເພື່ອຟື້ນຟູ ແລະ ພັດທະນາເສດຖະກິດ, ປະຕິບັດໜ້າທີ່ການເປັນແນວຫຼັງທີ່ຍິ່ງໃຫຍ່ ແລະ ເຂັ້ມແຂງ, ເພື່ອສະໜັບສະໜູນແນວໜ້າໃນຫວຽດນາມໃຕ້. ໄຊຊະນະອັນຍິ່ງໃຫຍ່ ຂອງລະດູບານໃໝ່ ປີ 1975, ໂດຍສະເພາະ ແມ່ນບັ້ນຮົບປະຫວັດສາດ ໂຮ່ຈີມິນ, ໄດ້ຢຸດຕິສົງຄາມ ແລະ ຍາດເອົາໄຊຊະນະຈາກຈັກກະພັດອາເມລິກາ, ສາມາດປົດປ່ອຍພາກໃຕ້ຢ່າງສົມບູນ ແລະ ທ້ອນໂຮມປະເທດຊາດເປັນເອກະພາບ.

ຫຼັງຈາກໄດ້ທ້ອນໂຮມເປັນເອກະພາບ, ປະເທດຫວຽດນາມ ຍັງຄົງປະເຊີນໜ້າກັບຫຼາຍບັນຫາຫຍຸ້ງຍາກໃຫຍ່ຫຼວງ. ດ້ານໜຶ່ງ ຈໍາເປັນຕ້ອງເລັ່ງແກ້ໄຂ ແລະ ຟື້ນຟູຜົນກະທົບທີ່ຮ້າຍແຮງຈາກການສົງຄາມອັນຍາວນານ ກວ່າ 30 ປີ, ດໍາເນີນການຮັບປະກັນຊີວິດການເປັນຢູ່ ຂອງປະຊາຊົນໃຫ້ເປັນປົກກະຕິ, ປັບປຸງອໍາ

ນາດການປົກຄອງ ແລະ ກໍ່ສ້າງພື້ນຖານເສດຖະກິດເປັນເອກະລາດ, ເປັນເຈົ້າຕົນ. ອີກດ້ານໜຶ່ງ ທັງດໍາເນີນການປ້ອງກັນຊາຍແດນປົກປ້ອງອະທິປະໄຕ ແລະ ເອກະລາດ ຂອງປະເທດຊາດອັນສັກສິດ; ພ້ອມກັນນັ້ນ ຍັງໄດ້ປະຕິບັດໜ້າທີ່ສາກົນອັນສູງສົ່ງ ໃນການຊ່ວຍເຫຼືອປະຊາຊົນ ກໍາປູເຈຍ ໃຫ້ຫຼຸດພົ້ນ ຈາກໄພດັບສູນເຊື້ອຊາດ ແລະ ດໍາເນີນການຟື້ນຟູ ແລະ ກໍ່ສ້າງປະເທດໃຫ້ກັບຄືນມາເປັນປົກກະຕິ.

ໃນຂະນະທີ່ກໍາລັງຕໍ່ສູ້ຢ່າງກ້າຫານເພື່ອປົກປັກຮັກສາປະເທດຊາດ, ປະເທດຫວຽດນາມ ຍັງຕ້ອງປະເຊີນໜ້າກັບສະພາບການຖືກປິດລ້ອມ ແລະ ຖືກມາດຕະການຄວບຄຸມ ປິດກັ້ນຢ່າງຍາວນານ ຈາກພາຍນອກ; ພ້ອມກັນນັ້ນ ກົດລະບຽບການບໍລິຫານແບບລວມສູນ, ອາດຍາສິດ, ເກື້ອກູນບໍ່ເໝາະສົມກັບເງື່ອນໄຂໃໝ່, ເຮັດໃຫ້ເກີດຂໍ້ຈໍາກັດ ແລະ ບັນຫາຫຼາຍປະການ ໃນຂະບວນການພັດທະນາເສດຖະກິດ-ສັງຄົມ. ໃນເງື່ອນໄຂທີ່ເຕັມໄປດ້ວຍຄວາມຫຍຸ້ງຍາກນັ້ນ, ພັກກອມມູນິດຫວຽດນາມ ຍັງຄົງຮັກສາບົດບາດການນໍາພາຢ່າງໝັ້ນຄົງ, ຍືນຢັນເປົ້າໝາຍເອກະລາດ ຕິດພັນກັບສັງຄົມນິຍົມ, ເສີມຂະຫຍາຍມະຫາສາມັກຄີທົ່ວປວງຊົນ, ກ້າວຂ້າມອຸປະສັກທີ່ລໍາບາກເທື່ອລະຂັ້ນ, ຟື້ນຟູເສດຖະກິດໃຫ້ກັບຄືນຢ່າງວ່ອງໄວ, ຮັກສາຄວາມໝັ້ນຄົງດ້ານການເມືອງ-ສັງຄົມ ແລະ ເອກະລາດ ຂອງປະເທດຊາດ, ສ້າງພື້ນຖານການປ່ຽນແປງຍຸດທະສາດໃນ ແນວຄວາມຄິດດ້ານການພັດທະນາ.

ສິບປີຫຼັງຈາກການເຕົ້າໂຮມປະເທດຊາດເປັນເອກະພາບ (1975-1985) ແມ່ນໄລຍະເວລາແຫ່ງສິ່ງທ້າທາຍຫຼາຍຢ່າງ. ໃນໄລຍະນັ້ນ ພັກກອມມູນິດຫວຽດນາມ ໄດ້ຄ່ອຍໆສໍາຫຼວດ ແລະ ຊອກຫາເສັ້ນທາງການປ່ຽນແປງໃໝ່, ພ້ອມທັງພັດທະນາແນວຄວາມຄິດ ຕໍ່ການພັດທະນາ ທີ່ເກີດຂຶ້ນ ຈາກສະພາບຄວາມເປັນຈິງອັນມີຊີວິດຊີວາ ຂອງການປະຕິວັດຫວຽດນາມ. ຜົນສໍາເລັດທີ່ບັນລຸໄດ້ ກໍຄື ຄວາມຫຍຸ້ງຍາກໃນໄລຍະນັ້ນໄດ້ກໍ່ໃຫ້ເກີດບົດຮຽນອັນມີຄ່າຢ່າງຫຼາຍ, ເຊິ່ງເປັນພື້ນຖານດ້ານຄວາມຄິດ ແລະ ພຶດຕິກໍາຕົວຈິງ ສໍາລັບການປ່ຽນແປງໃໝ່ຢ່າງຮອບດ້ານ ທີ່ພັກໄດ້ເລີ່ມຕົ້ນນັບແຕ່ປີ 1986.

**2. ບັນດາຜົນງານໃຫຍ່ຫຼວງ, ທີ່ມີຄວາມໝາຍປະຫວັດສາດ ໃນຂະບວນການນໍາພາປະເທດຊາດກ້າວຂຶ້ນສູ່ສັງຄົມນິຍົມ.**

ໜຶ່ງປະເທດທີ່ມີລະບອບການເມືອງເປັນເອກະລາດ, ມີອະທິປະໄຕຜືນແຜ່ນດິນ ແລະ ມີສິດໃນການກໍານົດເສັ້ນທາງພັດທະນາ ຂອງຕົນເອງ.

ການປະຕິວັດເດືອນ ສິງຫາ ປີ 1945 ທີ່ປະສົບຜົນສໍາເລັດ ໄດ້ເປັນບາດລ້ຽວທີ່ຍິ່ງໃຫຍ່ໃນປະຫວັດສາດ ຂອງຊາດຫວຽດນາມ. ເຫດການວັນທີ 02 ກັນຍາ 1945 ດ້ວຍການປະກາດສ້າງຕັ້ງປະເທດສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ເຊິ່ງເປັນລັດປະຊາທິປະໄຕປະຊາຊົນທໍາອິດ ໃນພາກພື້ນອາຊີຕາເວັນອອກສຽງໃຕ້ ໄດ້ສິ້ນສຸດລະບອບສັກດີນາຢ່າງຖາວອນ, ສິ້ນສຸດແອກປົກຄອງກວ່າ 81 ປີ. ຈາກນັ້ນເປັນຕົ້ນມາ, ຊາດຫວຽດນາມ ໄດ້ກ້າວເຂົ້າສູ່ຍຸກແຫ່ງເອກະລາດແຫ່ງຊາດ ຕິດກັບສັງຄົມນິຍົມ.

ສືບຕໍ່ຈາກໄຊຊະນະອັນຍິ່ງໃຫຍ່ນັ້ນ, ໃນວັນທີ 06 ມັງກອນ 1946, ການເລືອກຕັ້ງທົ່ວປະເທດຄັ້ງ

ທຳອິດ ໄດ້ຖືກຈັດຂຶ້ນຕາມຫຼັກການປະຊາທິປະໄຕ ແລະ ຄວາມກ້າວໜ້າ, ມີຕົວແທນສະພາແຫ່ງຊາດ 333 ທ່ານ ທີ່ໄດ້ຮັບຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈຈາກປະຊາຊົນທົ່ວປະເທດເລືອກຕັ້ງເຂົ້າມາ. ສະພາແຫ່ງຊາດ ສະໄໝທີ I ໄດ້ຮັບຮອງ ແລະ ປະກາດໃຊ້ລັດຖະທຳມະນູນ ປີ 1946, ກໍ່ສ້າງພື້ນຖານດ້ານນິຕິກຳສຳລັບລັດຮູບແບບໃໝ່, ຢືນຢັນອຳນາດ ຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນ, ມີສະຖານະທີ່ຄົບຖ້ວນໃນການເປັນຕົວແທນ ຂອງປະເທດໃນສາຍຕາສາກົນ.

ຫຼັງຈາກ 3 ທົດສະວັດແຫ່ງການຕໍ່ສູ້ອັນຍືດເຍື້ອຍາວນານ, ຈຸດສູງສຸດຄື ໄຊຊະນະຍິ່ງໃຫຍ່ລະດູບານໃໝ່ປີ 1975, ພາກໃຕ້ໄດ້ຮັບການປົດປ່ອຍຢ່າງສົມບູນ, ປະເທດຊາດ ໄດ້ກັບຄືນສູ່ການໂຮມເປັນເອກະພາບ. ໃນກອງປະຊຸມສູນກາງ ຄັ້ງທີ 24 ທີ່ຈັດຂຶ້ນເດືອນ 9/1975 ໄດ້ກຳນົດໜ້າທີ່ໃຫ້ສຳເລັດການໂຮມປະເທດໃນດ້ານລັດຖະການ. ຜົນໄດ້ຮັບຄື: ໃນວັນທີ 25 ເມສາ 1976, ມີປະຊາຊົນກວ່າ 23 ລ້ານຄົນ (ຄິດເປັນ 98,8% ຂອງທັງໝົດ) ເຂົ້າຮ່ວມການເລືອກຕັ້ງທົ່ວປະເທດ ເພື່ອເລືອກສະພາແຫ່ງຊາດຮ່ວມໃນທົ່ວປະເທດ. ໃນການປະຊຸມຄັ້ງທຳອິດ, ສະພາໄດ້ມີມະຕິກຳນົດຊື່ປະເທດແມ່ນ "ສາທາລະນະລັດ ສັງຄົມນິຍົມຫວຽດນາມ", ທຸງຊາດແມ່ນທຸງພື້ນແດງ ມີດາວເຫຼືອງຢູ່ກາງ; ເພັງຊາດແມ່ນ "ຕຽນກວນກາ"; ກາໝາຍປະເທດມີຂໍ້ຄວາມວ່າ "ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ"; ມະຕິຍັງໄດ້ກຳນົດໃຫ້ນະຄອນຮ່າໂນ້ຍເປັນນະຄອນຫຼວງ ແລະ ປ່ຽນຊື່ນະຄອນໄຊງ່ອນ ເປັນນະຄອນໂຮ່ຈິມິນ.

ການເຕົ້າໂຮມປະເທດໃນດ້ານລັດ ໄດ້ສ້າງເງື່ອນໄຂການເມືອງພື້ນຖານ ເພື່ອລະດົມ ແລະ ເສີມຂະຫຍາຍກຳລັງແຮງທົ່ວປວງຊົນ, ເປີດເສັ້ນທາງໃຫ້ແກ່ການສ້າງສາ ແລະ ປົກປັກຮັກສາປະເທດ ໃນຍຸກໃໝ່; ຢືນຢັນສິດທິໃນການຕັດສິນໃຈ ຂອງປະຊາຊົນຫວຽດນາມ ໃນເສັ້ນທາງເອກະລາດແຫ່ງຊາດ ຄຽງຄູ່ກັບລັດທິສັງຄົມນິຍົມ, ມຸ່ງສ້າງສາປະເທດຊາດໃຫ້ຮັ່ງມີ, ສີວິໄລ, ເຂັ້ມແຂງ.

*- ການຮັບຮູ້ ກ່ຽວກັບລັດທິສັງຄົມນິຍົມ ແລະ ເສັ້ນທາງກ້າວໄປສູ່ສັງຄົມນິຍົມ ມີຄວາມແຈ້ງຊັດຂຶ້ນເລື້ອຍໆ.*

ນັບແຕ່ເວລາກໍ່ຕັ້ງພັກໃນເດືອນ ກຸມພາ 1930, ພັກກອມມູນິດອິນດູຈີນ ກໍຄື ພັກກອມມູນິດຫວຽດນາມ ໄດ້ຢືນຢັນຢ່າງໝັ້ນຄົງໃນເສັ້ນທາງສັງຄົມນິຍົມ. ໂຄງການການເມືອງສະບັບທຳອິດ ທີ່ກອງປະຊຸມກໍ່ຕັ້ງພັກໄດ້ຮັບຮອງ, ໄດ້ກຳນົດເປົ້າໝາຍຍຸດທະສາດ "ເຮັດໃຫ້ປະເທດຫວຽດນາມໄດ້ຮັບເອກະລາດຢ່າງສົມບູນ" ເພື່ອ "ກ້າວໄປສູ່ສັງຄົມກອມມູນິດ". ໃນເດືອນ ຕຸລາ 1930 ພັກໄດ້ຊີ້ແຈ້ງຢ່າງຊັດເຈນຕື່ມວ່າ: ການປະຕິວັດຫວຽດນາມ "ຂ້າມຜ່ານຂັ້ນຕອນທຶນນິຍົມ ແລະ ກ້າວເຂົ້າສູ່ເສັ້ນທາງສັງຄົມນິຍົມໂດຍກົງ". ໄຊຊະນະ ຂອງການປະຕິວັດເດືອນ ສິງຫາ 1945, ພາຍໃຕ້ການນຳພາ ຂອງພັກ ແລະ ປະທານ ໂຮ່ຈິມິນ, ໄດ້ລົບລ້າງແອກລ່າເມືອງຂຶ້ນ, ສັກດີນາ, ເປີດສັກກະຫຼາດ ແຫ່ງເອກະລາດແຫ່ງຊາດ ຕິດພັນກັບລັດທິສັງຄົມນິຍົມ ເຊິ່ງເປັນສັກກະຫຼາດທີ່ປະຊາຊົນເປັນເຈົ້າ ຂອງສັງຄົມ ແລະ ເປັນເຈົ້າ ຂອງຊີວິດຕົນເອງ.

ໃນກອງປະຊຸມໃຫຍ່ ຄັ້ງທີ II ຂອງພັກກອມມູນິດອິນດູຈີນ ແລະ ໄດ້ປ່ຽນຊື່ເປັນພັກກອມມູນິດ

ຫວຽດນາມ ເດືອນກຸມພາ 1951, ໂຄງການການເມືອງ ຂອງພັກ ໄດ້ນຳສະເໜີເປັນຄັ້ງທຳອິດ ກ່ຽວກັບເງື່ອນໄຂ ແລະ ທິດທາງການຂ້າມຜ່ານກ້າວໄປ ສູ່ສັງຄົມນິຍົມ. ຫຼັງຈາກສອງທົດສະວັດໃນສົງຄາມປົດປ່ອຍ ແລະ ການຕໍ່ສູ້ປົກປັກຮັກສາປະເທດຊາດ, ການຮັບຮູ້ນັ້ນສືບຕໍ່ໄດ້ຮັບການປັບປຸງ ແລະ ພັດທະນາ. ບາດລ້ຽວປ່ຽນແປງໃໝ່ຮອບດ້ານ ໃນກອງປະຊຸມໃຫຍ່ ຄັ້ງທີ VI ຂອງພັກກອມມູນິດຫວຽດນາມ ເດືອນທັນວາ 1986 ພັກໄດ້ລິເລີ່ມຫັນເປັນທິດສະດີ ໂດຍການໝູນໃຊ້ຢ່າງສ້າງສັນ ລັດທິມາກ-ເລນິນ ແລະ ແນວຄິດ ໂຮ່ຈິມິນ, ພ້ອມກັບການສະຫຼຸບສັງລວມພຶດຕິກຳຕົວຈິງ ຂອງການປະຕິວັດໃນປະເທດ, ໄດ້ສ້າງພື້ນຖານໃຫ້ແກ່ແນວຄວາມຄິດໃໝ່ ກ່ຽວກັບໄລຍະຂ້າມຜ່ານ.

ໂຄງການການເມືອງສ້າງສາປະເທດ ໃນໄລຍະຂ້າມຜ່ານກ້າວໄປສູ່ສັງຄົມນິຍົມ ໄດ້ຖືກຮັບຮອງ ໃນກອງປະຊຸມໃຫຍ່ ຄັ້ງທີ VII ຂອງພັກກອມມູນິດຫວຽດນາມ ເດືອນມິຖຸນາ 1991, ໃນກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກກອມມູນິດຫວຽດນາມ ປີ 2011 ໄດ້ເພີ່ມເຕີມ ແລະ ພັດທະນາ ເຮັດໃຫ້ໂຄງການການເມືອງຂອງພັກ ມີຄວາມສົມບູນທາງດ້ານທິດສະດີ. ການກຳນົດ 8 ຄຸນລັກສະນະ ຂອງສັງຄົມສັງຄົມນິຍົມ ໃນໂຄງການການເມືອງ ໄດ້ຊ່ວຍໃຫ້ພັກ ຮັບຮູ້ໄດ້ເລິກເຊິ່ງຂຶ້ນ ເຖິງປະຊາທິປະໄຕສັງຄົມນິຍົມ, ສິດທິໃນການເປັນເຈົ້າຕົນເອງ ຂອງປະຊາຊົນ; ເຖິງເປົ້າໝາຍການພັດທະນາຢ່າງໄວ ແລະ ຍືນຍົງ; ຖື ຄຸນນະພາບ, ປະສິດທິຜົນ ແລະ ຄວາມສາມາດແຂ່ງຂັນ ຂອງເສດຖະກິດເປັນຈຸດໃຈກາງ; ຖືຄົນ ແລະ ວັດທະນະທຳເປັນພື້ນຖານທາງຈິດໃຈ, ແຮງຈູງໃຈພາຍໃນ ຂອງການພັດທະນາ; ຖືກຳລັງມະຫາສາມັກຄີ ທົ່ວຊາດ ຕິດພັນກັບການເປີດກວ້າງການພົວພັນສາກົນ, ການປະສານສົມທົບກຳລັງແຮງ ຂອງຊາດ ແລະ ກຳລັງແຮງ ຂອງຍຸກສະໄໝ.

ນັບແຕ່ກອງປະຊຸມໃຫຍ່ ຄັ້ງທີ VII - XIV ຂອງພັກກອມມູນິດຫວຽດນາມ, ນະໂຍບາຍປ່ຽນແປງໃໝ່ ໄດ້ຮັບການເພີ່ມເຕີມ ແລະ ສ້າງໃຫ້ສົມບູນຂຶ້ນ, ສືບຕໍ່ຢັ້ງຢືນວ່າ: ການຍຶດໝັ້ນໃນລັດທິມາກ-ເລນິນ ແລະ ແນວຄິດ ໂຮ່ຈິມິນ ເປັນພື້ນຖານແນວຄິດ ແລະ ເປັນເຂັມທິດໃນທຸກການກະທຳ; ພ້ອມກັນນັ້ນ ຍັງເນັ້ນເຖິງຄວາມຮຽກຮ້ອງໃນການປ່ຽນແປງໃໝ່ໃຫ້ຄົບຊຸດ, ຮອບດ້ານໃນທຸກຂົງເຂດ, ຮັກສາການກຳນົດທິດສັງຄົມນິຍົມໃຫ້ໝັ້ນຄົງ.

ຜົນສຳເລັດ ຂອງການປ່ຽນແປງໃໝ່ໃນ 4 ທົດສະວັດທີ່ຜ່ານມາ ໄດ້ພິສູດໃຫ້ເຫັນຄວາມຖືກຕ້ອງ ແລະ ຄວາມມີຫົວຄິດປະດິດສ້າງ ຂອງເສັ້ນທາງສັງຄົມນິຍົມໃນປະເທດຫວຽດນາມ: ເສດຖະກິດຮັກສາອັດຕາການເຕີບໂຕສູງຢ່າງຕໍ່ເນື່ອງ, ຊີວິດຄວາມເປັນຢູ່ ຂອງປະຊາຊົນໄດ້ຮັບການປັບປຸງໃຫ້ດີຂຶ້ນຢ່າງຊັດເຈນ, ຖານະບົດບາດ ແລະ ຄວາມໄວ້ວາງໃຈ ຂອງສາກົນ ຕໍ່ປະເທດ ໄດ້ຮັບການຍົກສູງຂຶ້ນຢ່າງຕໍ່ເນື່ອງ. ຜົນສຳເລັດເຫຼົ່ານັ້ນໄດ້ຢືນຢັນວ່າເສັ້ນທາງໄປສູ່ສັງຄົມນິຍົມ ເປັນເສັ້ນທາງທີ່ເໝາະສົມກັບຄວາມເປັນຈິງ ຂອງຫວຽດນາມ ແລະ ທ່າອ່ຽງການພັດທະນາ ຂອງຍຸກສະໄໝ; ພ້ອມກັນນັ້ນ ຍັງໄດ້ພິສູດໃຫ້ແກ່ການພັດທະນາທີ່ນັບມື້ນັບຊັດເຈນ ຂອງການຮັບຮູ້ທາງດ້ານທິດສະດີ ກ່ຽວກັບສັງຄົມນິຍົມ ແລະ ໄລຍະຂ້າມຜ່ານໄປສູ່ສັງຄົມນິຍົມພາຍໃຕ້ການນຳພາ ຂອງພັກກອມມູນິດຫວຽດນາມ.

*- ພື້ນຖານເສດຖະກິດໄດ້ຫຼຸດອອກຈາກສະພາບຊະງັກຊັກຊ້າ, ວິກິດການ ແລະ ດ້ອຍພັດທະນາ, ກາຍເປັນປະເທດກຳລັງພັດທະນາມີລາຍຮັບປານກາງ.*

ໄລຍະ 1945-1954 ແມ່ນໄລຍະເວລາທຳອິດໃນການກໍ່ສ້າງພື້ນຖານເສດຖະກິດໃໝ່ໃນຫວຽດນາມ, ພ້ອມກັນນັ້ນ ຍັງເປັນໄລຍະທີ່ໜັກໜ່ວງ ແລະ ລຳບາກທີ່ສຸດໃນປະຫວັດສາດການພັດທະນາປະເທດ. ໃນບັນດາເງື່ອນໄຂທີ່ຫາກໍ່ຍຶດອຳນາດການປົກຄອງໄດ້ ແຕ່ຕ້ອງເຂົ້າສູ່ສົງຄາມຕ້ານລ່າເມືອງຂຶ້ນຝຣັ່ງອັນຍາວນານ, ໜ້າທີ່ກໍ່ສ້າງ ແລະ ປັບປຸງພື້ນຖານເສດຖະກິດ ໄດ້ຖືກນຳໃຊ້ໃນເງື່ອນໄຂທີ່ຫຍຸ້ງຍາກທີ່ສຸດ. ພາຍໃຕ້ການນຳພາ ຂອງພັກ, ຫວຽດນາມໄດ້ຄ່ອຍໆຫັນປ່ຽນຈາກພື້ນຖານເສດຖະກິດທີ່ເປັນສິ່ງເສດເຫຼືອຂອງລະບອບລ່າເມືອງຂຶ້ນ, ສັກດີນາທີ່ຫຼ້າຫຼັງ, ເພິ່ງພາຕ່າງປະເທດ, ໃຫ້ກາຍເປັນພື້ນຖານເສດຖະກິດປະຊາທິປະໄຕ, ເອກະລາດເທື່ອລະກ້າວ ແລະ ຮັບໃຊ້ໂດຍກົງໃຫ້ແກ່ພາລະກິດຕໍ່ສູ້ ແລະ ການສ້າງສາປະເທດ.

ນັບແຕ່ປີ 1955-1975, ປະເທດຊາດຖືກແບ່ງອອກເປັນສອງພາກ ດ້ວຍສອງແບບແຜນເສດຖະກິດ-ສັງຄົມທີ່ແຕກຕ່າງກັນ. ຢູ່ພາກເໜືອ, ພັກ ແລະ ລັດໄດ້ນຳພາປະຕິບັດໜ້າທີ່ດ້ານເສດຖະກິດທີ່ເໝາະສົມກັບແຕ່ລະໄລຍະ: ປີ 1955-1957 ໄດ້ນຳພາການຟື້ນຟູ ແລະ ຮຳບາດແຜສົງຄາມ, ປີ 1958-1960 ໄດ້ສຳເລັດການປະຕິຮູບທີ່ດິນ ແລະ ປັບປຸງການພົວພັນການຜະລິດຕາມແນວທາງສັງຄົມນິຍົມ, ປີ 1961-1975 ໄດ້ນຳພາຫັນມາສູ່ການພັດທະນາເສດຖະກິດ ຄຽງຄູ່ກັບໜ້າທີ່ການກໍ່ສ້າງແນວຫຼັງໃຫຍ່ ໃຫ້ແກ່ແນວໜ້າພາກໃຕ້ໃນເງື່ອນໄຂສົງຄາມອັນດຸເດືອດ.

ໄລຍະ 1976-1985, ຫຼັງຈາກປະເທດຊາດໄດ້ໂຮມເປັນເອກະພາບ, ປະຊາຊົນທົ່ວປະເທດໄດ້ກ້າວເຂົ້າສູ່ເສັ້ນທາງສັງຄົມນິຍົມ. ນີ້ແມ່ນໄລຍະເວລາທີ່ວຽກງານປັບປຸງ, ສ້າງສາ ແລະ ພັດທະນາເສດຖະກິດຖືກກຳນົດໃຫ້ເປັນໜ້າທີ່ສຳຄັນທີ່ສຸດ ຂອງທົ່ວພັກ, ທົ່ວປວງຊົນ ແລະ ທົ່ວກອງທັບຫວຽດນາມ. ປະຊາຊົນທົ່ວປະເທດ ໄດ້ເຂົ້າຮ່ວມດ້ວຍຄວາມກະຕືລືລົ້ນ ໃນການດຳເນີນແຜນພັດທະນາ 5 ປີ ຄັ້ງທີ II (1976-1980) ແລະ ແຜນພັດທະນາ 5 ປີ ຄັ້ງທີ III (1981-1985). ເຖິງວ່າບັນລຸໄດ້ຜົນສຳເລັດໃນເບື້ອງຕົ້ນຈຳນວນໜຶ່ງໃນການຟື້ນຟູການຜະລິດ ແລະ ການກໍ່ສ້າງພື້ນຖານວັດຖຸ-ເຕັກນິກ, ແຕ່ເບິ່ງລວມພື້ນຖານເສດຖະກິດຍັງມີຄວາມອ່ອນນ້ອຍ ແລະ ຂາດປະສິດທິຜົນຫຼາຍຢ່າງ. ຂໍ້ຈຳກັດ ຂອງລະບົບບໍລິຫານແບບລວມສູນ ແລະ ເກື້ອກູນແກ່ຍາວ, ປະກອບກັບຄວາມຫຍຸ້ງຍາກຈາກພາຍນອກ, ໄດ້ເຮັດໃຫ້ເສດຖະກິດຕົກຢູ່ໃນສະພາບຊະງັກຊັກຊ້າ, ຂາດຄວາມດຸ່ນດ່ຽງ, ຊ້ຳບໍ່ໜຳຍັງປະເຊີນກັບສະພາບວິກິດການທີ່ຮ້າຍແຮງ.

ຕໍ່ໜ້າສະພາບການດັ່ງກ່າວນັ້ນ, ນັບແຕ່ປີ 1986 ເປັນຕົ້ນມາ, ພັກກອມມູນິດຫວຽດນາມ ໄດ້ລິເລີ່ມ ແລະ ນຳພາວຽກງານປ່ຽນແປງໃໝ່ຢ່າງຮອບດ້ານໃນປະເທດ, ກ່ອນອື່ນໝົດ ແມ່ນການປ່ຽນແປງໃໝ່ແນວຄວາມຄິດທາງດ້ານເສດຖະກິດ. ດ້ວຍການຄ່ອຍໆລົບລ້າງລະບອບເກື້ອກູນ, ພັດທະນາເສດຖະກິດຫຼາຍພາກສ່ວນ ແລະ ໃຫ້ເສດຖະກິດເຄື່ອນໄຫວຕາມກົນໄກຕະຫຼາດພາຍໃຕ້ການ ຄວບຄຸມ ຂອງລັດ ຕາມແນວທາງສັງຄົມນິຍົມ, ພື້ນຖານເສດຖະກິດຫວຽດນາມ ໄດ້ປະກົດການປ່ຽນແປງເປັນທາງບວກ. ມາຮອດປີ

1995, ບັນດາຕົວຊີ້ວັດຫຼັກ ຂອງແຜນການ 5 ປີ (1991-1995) ລ້ວນແຕ່ໄດ້ຮັບຜົນສຳເລັດ ແລະ ບາງດ້ານເກີນເປົ້າໝາຍ, ຊ່ວຍໃຫ້ປະເທດຫຼຸດອອກຈາກວິກິດເສດຖະກິດ-ສັງຄົມ, ສ້າງພື້ນຖານໃຫ້ເຂົ້າສູ່ໄລຍະພັດທະນາໃໝ່, ຍູ້ແຮງການຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

ຈາກປະເທດທີ່ທຸກຍາກ, ຫຼ້າຫຼັງ, ຖືກຜົນກະທົບຢ່າງໜັກໜ່ວງຈາກສົງຄາມ ແລະ ມາດຕະການປິດລ້ອມ, ຫວຽດນາມໄດ້ບືນຕົວຂຶ້ນກາຍເປັນປະເທດກຳລັງພັດທະນາມີລາຍຮັບປານກາງ. ຈົນເຖິງປີ 2024, ຂະໜາດເສດຖະກິດ ຂອງຫວຽດນາມ ຢູ່ອັນດັບທີ 32 ຂອງໂລກ ມີມູນຄ່າຫຼາຍກວ່າ 476 ຕື້ໂດລາສະຫະລັດ, ຢູ່ໃນກຸ່ມ 20 ພື້ນຖານເສດຖະກິດທີ່ຢູ່ແນວໜ້າ ຂອງໂລກໃນດ້ານການຄ້າ ແລະ ການດຶງດູດການລົງທຶນຈາກຕ່າງປະເທດ. ຜົນສຳເລັດດັ່ງກ່າວເປັນຫຼັກຖານຊັດເຈນສະທ້ອນໃຫ້ເຫັນເຖິງຂະໜາດ, ສະຕິປັນຍາ ແລະ ຄຸນນະພາບ ຂອງພັກ, ລັດ ແລະ ປະຊາຊົນຫວຽດນາມ ໃນການເດີນທາງຜ່ານຜ່າອຸປະສັກ, ປຸກລຸກກຳລັງແຮງພາຍໃນ, ຍາດແຍ່ງໂອກາດ, ເຂົ້າຮ່ວມຢ່າງເລິກເຊິ່ງ ແລະ ພັດທະນາຢ່າງຍືນຍົງ.

*- ວັດທະນະທຳມີຄວາມຫຼາກຫຼາຍ, ອຸດົມສົມບູນ, ມີລັກສະນະຊົນຊາດ, ວິທະຍາສາດ ແລະ ມວນຊົນໃນທຸກດ້ານ ຂອງຊີວິດສັງຄົມ, ກາຍເປັນແຫຼ່ງກຳລັງພັດທະນາປະເທດ.*

ຄວາມຮັບຮູ້ ຂອງພັກ, ລັດ, ຂອງປະຊາຊົນ ກ່ຽວກັບບົດບາດ ຂອງວັດທະນະທຳ ໃນການສ້າງສາ ແລະ ປົກປ້ອງປະເທດຊາດນັບມື້ຄົບຖ້ວນ ແລະ ຍົກສູງຂຶ້ນເລື້ອຍໆ. ວຽກງານສ້າງສາ ແລະ ພັດທະນາວັດທະນະທຳ, ຄົນຫວຽດນາມ ໄດ້ມີການຫັນປ່ຽນຢ່າງຕັ້ງໜ້າ ແລະ ບັນລຸຜົນສຳເລັດທີ່ສຳຄັນ. ຈິນຕະນາການກ່ຽວກັບວັດທະນະທຳມີການກ້າວໜ້າ; ການຮັບຮູ້ ກ່ຽວກັບວັດທະນະທຳ ຂອງບັນດາຂັ້ນ, ບັນດາພາກສ່ວນ ແລະ ຂອງປວງຊົນໄດ້ຖືກຍົກສູງຂຶ້ນ. ຊີວິດວັດທະນະທຳ ຂອງປະຊາຊົນ ມີຄວາມອຸດົມສົມບູນຫຼາຍຂຶ້ນ, ຄ່ານິຍົມວັດທະນະທຳປະເພນີດັ້ງເດີມ ຂອງຊາດ ໄດ້ຮັບການເສີມຂະຫຍາຍ, ຫຼາຍມາດຖານວັດທະນະທຳ, ຄຸນສົມບັດຈັນຍາບັນໃໝ່ໄດ້ກຳເນີດເກີດຂຶ້ນ. ຜະລິດຕະພັນວັດທະນະທຳ, ວັນນະຄະດີ-ສິລະປະເພີ່ມຂຶ້ນທັງດ້ານປະລິມານ ແລະ ຄຸນນະພາບ; ເທັກໂນໂລຊີຂໍ້ມູນຂ່າວສານ, ໂດຍສະເພາະ ສື່ມວນຊົນມີການພັດທະນາຢ່າງແຮງກ້າ. ຂະບວນການ ແລະ ກິດຈະກຳວັດທະນະທຳຫຼາຍຢ່າງ ໄດ້ບັນລຸຜົນສຳເລັດທີ່ຊັດເຈນ ເປັນຮູບປະທຳຕົວຈິງ; ໄດ້ປຸກລະດົມປະເພນີວັດທະນະທຳຄອບຄົວ, ວົງຕະກູນ, ຊຸມຊົນ… ການຫັນວັດທະນະທຳເປັນລັກສະນະສັງຄົມ ນັບມື້ໄດ້ຮັບການເປີດກວ້າງ, ມີສ່ວນສຳຄັນໃນການສ້າງກິດບັນຍັດທາງດ້ານວັດທະນະທຳ. ມໍລະດົກວັດທະນະທຳ ດ້ານວັດຖຸ ແລະ ນາມມະທຳຫຼາຍຢ່າງໄດ້ຮັບກາອະນຸລັກ ແລະ ຟື້ນຟູ; ປະເພນີ, ຂະບວນການ ຂອງຊົນເຜົ່າສ່ວນນ້ອຍ ຫຼາຍຢ່າງໄດ້ຮັບການສຶກສາ, ເກັບກຳ ແລະ ຟື້ນຟູ; ກິດຈະກຳຄວາມເຊື່ອ ແລະ ສາສະໜາ ການປະຕິບັດວັດທະນະທຳ ດ້ານຈິດວິນຍານ ຂອງປະຊາຊົນໄດ້ຮັບການເອົາໃຈໃສ່. ວຽກງານບໍລິຫານລັດ ທາງດ້ານວັດທະນະທຳໄດ້ຮັບການເພີ່ມທະວີ, ລະບົບກົດໝາຍວັດທະນະທຳ ໄດ້ຖືກສ້າງຕັ້ງສົມບູນຂຶ້ນເທື່ອລະກ້າວ. ພະນັກງານເຮັດວຽກວັດທະນະທຳ-ສິລະປະມີການເຕີບໂຕ, ສິດໃນການ

ສ້າງສັນ ຂອງບັນດານັກສິລະປິນ ໄດ້ຮັບການເຄົາລົບ, ການແລກປ່ຽນ ແລະ ຄວາມຮ່ວມມືສາກົນ ດ້ານວັດທະນະທຳ ມີຄວາມຄຶກຄື້ນ ແລະ ບັນລຸຜົນເປັນຮູບປະທຳ.

*- ລະບົບນະໂຍບາຍສັງຄົມໄດ້ຖືກສ້າງຂຶ້ນ ແລະ ນັບມື້ນັບສົມບູນແບບ.*

ນັບແຕ່ປີ 1986 ເຖິງປັດຈຸບັນ, ພ້ອມກັບຂະບວນການດຳເນີນວຽກງານປ່ຽນແປງໃໝ່ຢ່າງຮອບດ້ານໃນປະເທດ, ຂະແໜງສັງຄົມໄດ້ບັນລຸຜົນສຳເລັດສຳຄັນຫຼາຍຢ່າງ, ປະກອບສ່ວນຮັບປະກັນຄວາມໝັ້ນຄົງດ້ານການເມືອງ-ສັງຄົມ ແລະ ຍົກສູງຄຸນນະພາບຊີວິດ ຂອງປະຊາຊົນ. ຄວາມຮັບຮູ້ ແລະ ທັດສະນະ ຂອງພັກກອມມູນິດຫວຽດນາມ ກ່ຽວກັບນະໂຍບາຍສັງຄົມໄດ້ຖືກພັດທະນາໃຫ້ສົມບູນ ແລະ ກາຍເປັນລະບົບອັນສົມດຸນ, ມີເນື້ອໃນຫຼັກທີ່ສຳຄັນຄື: ການເຕີບໂຕທາງເສດຖະກິດຈະຕ້ອງໄປຄຽງຄູ່ກັບຄວາມກ້າວໜ້າ ແລະ ຄວາມຍຸຕິທຳທາງສັງຄົມ, ການພັດທະນາເພື່ອມະນຸດ ແລະ ວາງມະນຸດໄວ້ໃນຕຳແໜ່ງສູນກາງ ຂອງການພັດທະນາ.

ນະໂຍບາຍສັງຄົມທີ່ຖືກຕ້ອງ, ມີມະນຸດສະທຳ ແລະ ເພື່ອຄວາມສຸກ ຂອງປະຊາຊົນຖືກກຳນົດວ່າບໍ່ພຽງແຕ່ເປັນເປົ້າໝາຍ ແຕ່ຍັງເປັນພະລັງອັນໃຫຍ່ຫຼວງ, ປຸກລະດົມ ແລະ ເສີມຂະຫຍາຍທຸກຄວາມສາມາດບົ່ມຊ້ອນປະດິດສ້າງໃນທົ່ວສັງຄົມ, ສ້າງຄວາມເປັນເອກະພາບສູງໃນຂະບວນການກໍ່ສ້າງສັງຄົມນິຍົມ. ພັກກອມມູນິດຫວຽດນາມ ໄດ້ຢືນຢັນຢ່າງຊັດເຈນວ່າ ໜ້າທີ່ຮັບຜິດຊອບນີ້ແມ່ນ ຂອງທົ່ວສັງຄົມ, ຂອງທົ່ວລະບົບການເມືອງ ແລະ ຂອງທຸກຄົນ ໃນການດຳເນີນ ແລະ ແກ້ໄຂບັນຫາສັງຄົມຕາມທິດທາງເປັນລັກສະນະສັງຄົມຢ່າງແຂງແຮງ, ໃນນັ້ນລັດເປັນຫຼັກແຫຼ່ງ, ຮັບປະກັນໃຫ້ມີຄວາມຍຸຕິທຳ, ປະສິດທິຜົນ ແລະ ຄວາມຍືນຍົງ.

ການກຳນົດທິດເຫຼົ່ານີ້ ມຸ່ງໄປສູ່ເປົ້າໝາຍໃນການສ້າງລະບົບປົກປ້ອງສັງຄົມທີ່ຮອບດ້ານ, ຄອບຄຸມ ແລະ ຍືນຍົງ ເຊິ່ງທຸກຄົນໃນປະເທດ ຈະໄດ້ຮັບການປົກປ້ອງຄວາມປອດໄພໃນດ້ານລາຍຮັບ, ການຈ້າງງານ, ສຸຂະພາບ, ການສຶກສາ, ທີ່ຢູ່ອາໄສ ແລະ ບໍລິການພື້ນຖານຕ່າງໆ. ຜ່ານມານັ້ນ ຢືນຢັນຄຸນລັກສະນະອັນດີເລີດ ຂອງລະບົບ ແລະ ເສີມສ້າງຄວາມເຊື່ອໝັ້ນທາງສັງຄົມ ຕໍ່ການນຳພາ ຂອງພັກ ແລະ ການບໍລິຫານ ຂອງລັດ ໃນວຽກງານພັດທະນາປະເທດ.

*- ການປົກປ້ອງເອກະລາດ, ອະທິປະໄຕ, ການໂຮມປະເທດເປັນເອກະພາບ ແລະ ຜືນແຜ່ນດິນອັນຄົບຖ້ວນ, ຜົນປະໂຫຍດ ຂອງຊາດ ແລະ ຊົນເຜົ່າ; ປົກປ້ອງພັກ, ລັດ, ປະຊາຊົນ ແລະ ລະບອບສັງຄົມນິຍົມ; ຮັກສາຄວາມໝັ້ນຄົງແຫ່ງຊາດ, ສະຖຽນລະພາບທາງການເມືອງ-ສັງຄົມ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພ ຂອງສັງຄົມ, ພ້ອມທັງຮັກສາສະພາບແວດລ້ອມແຫ່ງສັນຕິພາບ ເພື່ອສຸມໃສ່ການສ້າງສາ ແລະ ພັດທະນາປະເທດ.*

ໃນໄລຍະ 81 ປີຜ່ານມາ ຂອງທົ່ວພັກ, ທົ່ວກອງທັບ ແລະ ທົ່ວປວງຊົນ ຫວຽດນາມ ແມ່ນສາມາດປົກປັກຮັກສາໝາກຜົນ ຂອງການປະຕິວັດໄດ້ຢ່າງໝັ້ນຄົງ, ຮັບປະກັນສະພາບແວດລ້ອມສັນຕິພາບ, ສ້າງພື້ນຖານ ແລະ ເງື່ອນໄຂ ເພື່ອການພັດທະນາປະເທດໃຫ້ໄວ ແລະ ຍືນຍົງ.

ພາຍໃຕ້ການນຳພາອັນເດັດດ່ຽວ ແລະ ໂດຍກົງທຸກດ້ານ ຂອງພັກ, ການບໍລິຫານອັນເປັນເອກະພາບ ຂອງລັດ ແລະ ຄວາມສາມັກຄີ ຂອງປວງຊົນ, ຫວຽດນາມ ໄດ້ຢືນຢັນ ແລະ ສືບຕໍ່ຮັກສາເອກະລາດ, ອະທິປະໄຕ, ເອກະພາບ ແລະ ຜືນແຜ່ນດິນອັນຄົບຖ້ວນ, ປົກປ້ອງຊາຍແດນປະເທດ ແລະ ທະເລ-ເກາະ ອັນສັກສິດ ຂອງປະເທດໃຫ້ໝັ້ນຄົງ. ພ້ອມກັນນັ້ນ ຍັງຮັກສາຈຸດເດັ່ນ ດ້ານຍຸດທະສາດ, ດຳເນີນການຢ່າງຄ່ອງແຄ້ວ ແລະ ສ້າງສັນໃນການຮັບມືກັບສະຖານະການສັບຊ້ອນ, ສະດຸ້ງໄວດ້ານການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ສາມາດທັບທ້າງການທຳລາຍທຸກຮູບແບບ ຂອງບັນດາອິດທິກຳລັງປໍລະປັກ, ປະຕິການ, ໂດຍສະເພາະ ໃນພື້ນທີ່ເຄືອຂ່າຍອິນເຕີເນັດ ແລະ ໃນຂົງເຂດຄວາມຄິດອຸດົມການ, ວັດທະນະທຳ, ຊົນເຜົ່າ, ສາສະໜາ ແລະ ສິດທິມະນຸດ.

ຄວາມໝັ້ນຄົງດ້ານການເມືອງ ແລະ ຄວາມປອດໄພສັງຄົມ ໄດ້ຖືກຮັກສາໄວ້ແບບໝັ້ນຄົງ; ສ້າງເງື່ອນໄຂອຳນວຍໃຫ້ແກ່ການພັດທະນາປະເທດ; ເຄືອຂ່າຍການປ້ອງກັນປະເທດແບບປວງຊົນ ຕິດພັນກັບເຄືອຂ່າຍຄວາມໝັ້ນຄົງ ຂອງປະຊາຊົນ ໄດ້ຮັບການສ້າງຕັ້ງຂຶ້ນຢ່າງຄົບຖ້ວນ ແລະ ມີປະສິດທິຜົນຈາກສູນກາງຈົນເຖິງຮາກຖານ. ຄວາມສາມາດປ້ອງກັນປະເທດ, ໂດຍສະເພາະ ໃນພື້ນທີ່ຍຸດທະສາດສຳຄັນ, ໄດ້ຮັບການພັດທະນາໃຫ້ແຂງແຮງຢ່າງຕໍ່ເນື່ອງ. ກອງກຳລັງປົກປ້ອງປະຊາຊົນໄດ້ຮັບການປັບປຸງຢ່າງຕໍ່ເນື່ອງ, ເປັນລະບຽບ ແລະ ທັນສະໄໝ.

ຫວຽດນາມໄດ້ຢືນຢັນໃນເສັ້ນທາງການປ້ອງກັນປະເທດແບບປວງຊົນ, ພື້ນຖານການປ້ອງກັນແຫ່ງຊາດມີລັກສະນະສັນຕິພາບ, ມີຄວາມໝາຍເປັນການປ້ອງກັນຕົນ, ບໍ່ເຂົ້າຮ່ວມພັນທະທາງທະຫານ, ບໍ່ອະນຸຍາດໃຫ້ຕ່າງປະເທດຕັ້ງຖານທັບໃນດິນແດນ ຂອງຫວຽດນາມ, ບໍ່ໃຊ້ກຳລັງທະຫານໃນສາຍພົວພັນສາກົນ. ສິ່ງດັ່ງກ່າວໄດ້ຍົກສູງຖານະບົດບາດ ແລະ ຊື່ສຽງ ຂອງຫວຽດນາມ ໃນເວທີສາກົນ, ຊ່ວຍເສີມສ້າງຄວາມເຊື່ອໝັ້ນດ້ານຍຸດທະສາດ, ສ້າງພາບລັກ ຂອງປະເທດທີ່ຮັກສັນຕິພາບ, ມີຄວາມຮັບຜິດຊອບ ແລະ ມີບົດບາດລິເລີ່ມໃນການເຂົ້າຮ່ວມສາກົນ, ຮ່ວມມືດ້ານການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ປົກປ້ອງຜົນປະໂຫຍດ ຂອງຊາດ ແລະ ຊົນເຜົ່າດ້ວຍກຳລັງແຮງສັງລວມ.

ໂດຍສະເພາະ ໃນເວລາທີ່ຄວາມທ້າທາຍດ້ານຄວາມໝັ້ນຄົງແບບໃໝ່ເພີ່ມຂຶ້ນ (ເຊັ່ນ ໂລກລະບາດ, ໄພພິບັດ, ການປ່ຽນແປງດິນຟ້າອາກາດ, ການກໍ່ການຮ້າຍ, ຄວາມປອດໄພເຄືອຂ່າຍ…), ຫວຽດນາມ ໄດ້ຍົກສູງຄວາມສາມາດໃນການຮັບມື, ປະສານງານຢ່າງມີປະສິດທິຜົນ, ລະດົມກຳລັງແຮງສັງລວມ ຂອງທົ່ວລະບົບການເມືອງ ແລະ ປວງຊົນ ເພື່ອຮັກສາຄວາມໝັ້ນຄົງ, ເສີມສ້າງຄວາມເຊື່ອໝັ້ນ ແລະ ວາງພື້ນຖານໝັ້ນຄົງໃຫ້ກັບຂະບວນການປ່ຽນແປງໃໝ່ ແລະ ການພັດທະນາປະເທດ.

ຜົນສຳເລັດທີ່ໂດດເດັ່ນໃນການປົກປ້ອງປະເທດຕະຫຼອດ 81 ປີຜ່ານມາ ບໍ່ພຽງແຕ່ການຮັກສາອະທິປະໄຕດິນແດນອັນສັກສິດ, ແຕ່ຍັງເປັນການຮັກສາເສັ້ນທາງສັງຄົມນິຍົມໃຫ້ໝັ້ນຄົງ, ປົກປ້ອງພັກ, ລັດ,

ປະຊາຊົນ ແລະ ລະບອບ; ພ້ອມກັນນັ້ນ ຍັງໄດ້ສ້າງສະຖານະ ແລະ ພະລັງໃໝ່ໃຫ້ແກ່ຫວຽດນາມ ໃນການເຊື່ອມໂຍງສາກົນຢ່າງເລິກເຊິ່ງ, ຍົກສູງຖານະບົດບາດ ແລະ ຊື່ສຽງໃນເວທີສາກົນ.

- *ວຽກງານຕ່າງປະເທດໄດ້ມີສ່ວນຮ່ວມໃນການຮັກສາ ແລະ ເສີມສ້າງສະພາບແວດລ້ອມສັນຕິພາບອັນໝັ້ນຄົງ, ຮັກສາເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ, ປົກປ້ອງລະບອບສັງຄົມນິຍົມ.*

ພາຍຫຼັງຈາກໄຊຊະນະ ຂອງການປະຕິວັດເດືອນ ສິງຫາ 1945, ພັກກອມມູນິດຫວຽດນາມ ແລະ ປະທານ ໂຮ່ຈີມິນ ໄດ້ກຳນົດແນວທາງການຕ່າງປະເທດ ທີ່ເປັນເອກະລາດ, ມີອະທິປະໄຕ, ອ່ອນໂຍນ ມີໄຫວພິບ, ເພື່ອປຸກລະດົມການສະໜັບສະໜູນ ໃຫ້ໄດ້ຫຼາຍທີ່ສຸດຈາກເພື່ອນມິດສາກົນ ໃນການປົກປ້ອງລັດຖະບານປະຕິວັດ ທີ່ຫາກໍເກີດໃໝ່. ໃນຊ່ວງສົງຄາມຕ້ານພວກລ່າເມືອງຂຶ້ນຝຣັ່ງ, ການທູດ ຂອງຫວຽດນາມ ໄດ້ຢືນຢັນຢ່າງໜັກແໜ້ນ ໃນຫຼັກການ "ໃຊ້ຄວາມຖືກຕ້ອງຊະນະອຳນາດເດັດຂາດ", ປະສານປະສົມຢ່າງກົມກຽວ ລະຫວ່າງ ການຕໍ່ສູ້ທາງທະຫານ ກັບການຕໍ່ສູ້ທາງການເມືອງ ແລະ ການທູດ, ສ້າງການສະໜັບສະໜູນຈາກສາກົນຢ່າງກວ້າງຂວາງໃນການຕໍ່ສູ້ເພື່ອຄວາມເປັນທຳ ຂອງປະຊາຊົນຫວຽດນາມ.

ນັບແຕ່ຕົ້ນປີ 1950, ການດຳເນີນວຽກງານການຕ່າງປະເທດ ໄດ້ປະຕິບັດຢ່າງມີລະບົບຜ່ານ 3 ຊ່ອງທາງ ຄື: ການຕ່າງປະເທດ ຂອງພັກ, ການທູດ ຂອງລັດ ແລະ ການທູດ ຂອງປະຊາຊົນ. ກົນໄກການປະສານດັ່ງກ່າວ ໄດ້ເຮັດໃຫ້ວິທີການປຸກລະດົມສາກົນມີຄວາມຫຼາກຫຼາຍ ແລະ ມີປະສິດທິຜົນ, ມີສ່ວນສຳຄັນໃນໄຊຊະນະ ຂອງການຕໍ່ສູ້ປົດປ່ອຍຊາດ, ໂຮມປະເທດເປັນເອກະພາບ ແລະ ຫຼັງຈາກນັ້ນແມ່ນການກໍ່ສ້າງສັງຄົມນິຍົມ.

ເຂົ້າສູ່ໄລຍະການປ່ຽນແປງໃໝ່, ໃນບໍລິບົດທີ່ລະບຽບໂລກມີການເຄື່ອນໄຫວຢ່າງເລິກເຊິ່ງ, ກອງປະຊຸມໃຫຍ່ ຄັ້ງທີ VII ຂອງພັກກອມມູນິດຫວຽດນາມ ໃນປີ 1991 ໄດ້ກຳນົດຫຼັກການ "ຫຼາຍຝ່າຍສຳພັນ, ຫຼາຍຮູບແບບ" ດ້ວຍຈິດໃຈວ່າ: ຫວຽດນາມປາດຖະນາທີ່ຈະເປັນໝູ່ ແລະ ເປັນຄູ່ຮ່ວມມືທີ່ເຊື່ອຖືໄດ້ ຂອງທຸກປະເທດ, ພາຍໃຕ້ຄວາມພະຍາຍາມ ເພື່ອສັນຕິພາບ, ເອກະລາດ ແລະ ການພັດທະນາ. ນັບຕັ້ງແຕ່ກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກກອມມູນິດຫວຽດນາມ ມາເຖິງປັດຈຸບັນ ກໍໄດ້ຢືນຢັນເສັ້ນທາງການຕ່າງປະເທດທີ່ເປັນເອກະລາດ, ມີອະທິປະໄຕ, ເປີດກວ້າງ, ຫຼາຍຝ່າຍສຳພັນ, ຫຼາຍຮູບແບບ, ເພື່ອຜົນປະໂຫຍດແຫ່ງຊາດ-ຊົນເຜົ່າ ແລະ ສັນຕິພາບ, ການຮ່ວມມື, ການພັດທະນາເປັນຄູ່ຮ່ວມ.

ການຢືນຢັນແນວທາງດັ່ງກ່າວ, ຫວຽດນາມສາມາດສ້າງຄວາມສຳພັນ ແລະ ສົ່ງເສີມຄວາມສຳພັນກັບບັນດາຄູ່ຮ່ວມມືທີ່ສຳຄັນເປັນປົກກະຕິ, ໄດ້ເຂົ້າເປັນສະມາຊິກຂອງ ASEAN, WTO, CPTPP ແລະ ໄດ້ລົງນາມຂໍ້ຕົກລົງ EVFTA, RCEP…; ສ້າງຕັ້ງເຄືອຂ່າຍຄູ່ຮ່ວມມືສາກົນ; ສ້າງຕັ້ງ ແລະ ຮັກສາຄວາມສຳພັນການທູດກັບ 194/194 ປະເທດສະມາຊິກສະຫະປະຊາຊາດ; ສ້າງຕັ້ງ ແລະ ຍົກລະດັບຄວາມສຳພັນຫຼາຍປະເທດໃຫ້ເປັນ ຄູ່ຮ່ວມມືຍຸດທະສາດ ແລະ ຄູ່ຮ່ວມມືຮອບດ້ານ; ສ້າງຕັ້ງຄວາມສຳພັນມິດຕະພາບ

ແລະ ຄວາມຮ່ວມມືຢ່າງເລິກເຊິ່ງ ກັບ 5 ປະເທດ ກຳມະການປະຈຳການສະພາຄວາມໝັ້ນຄົງສະຫະປະຊາຊາດ, ປະເທດ G7, ປະເທດ G20; ຢືນຢັນບົດບາດ ແລະ ຊື່ສຽງໃນບັນດາເວທີຫຼາຍຝ່າຍ; ເຂົ້າຮ່ວມຢ່າງກະຕືລືລົ້ນໃນກຳລັງຮັກສາສັນຕິພາບ; ປະຕິບັດຢ່າງມີປະສິດທິຜົນວຽກງານການທູດເສດຖະກິດ, ການທູດວັດທະນະທຳ..., ມີສ່ວນສຳຄັນໃນການຮັກສາສະພາບແວດລ້ອມສັນຕິພາບ, ປົກປ້ອງອະທິປະໄຕ ແລະ ສົ່ງເສີມການພັດທະນາເສດຖະກິດ-ສັງຄົມ.

3. **ການສ້າງສາ ແລະ ສຳເລັດລັດແຫ່ງກົດໝາຍສັງຄົມນິຍົມ.**

ຫຼັງຈາກໄຊຊະນະ ຂອງການປະຕິວັດເດືອນ ສິງຫາ 1945, ໃນວັນທີ 2 ກັນຍາ 1945, ປະທານ ໂຮ່ຈີມິນ ໄດ້ອ່ານຖະແຫຼງການປະກາດເອກະລາດ, ສະຖາປານາປະເທດ ສາທາລະນະລັດ ປະຊາທິປະໄຕຫວຽດນາມ, ປັດຈຸບັນແມ່ນ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ວາງພື້ນຖານອັນເປັນກ້າວທຳອິດໃຫ້ແກ່ລະບົບລັດແບບໃໝ່ໃນຫວຽດນາມ-ລັດແຫ່ງກົດໝາຍສັງຄົມນິຍົມ.

ລັດຖະທຳມະນູນ ປີ 1946 ເປັນລັດຖະທຳມະນູນປະຊາທິປະໄຕຄັ້ງທຳອິດ ຂອງປະເທດ ໄດ້ສະທ້ອນຢ່າງຊັດເຈນ ເຖິງຄວາມຕ້ອງການສ້າງຕັ້ງລັດຖະບານປະຊາທິປະໄຕ ແລະ ນິຕິທຳ. ຄວາມຄິດ ຂອງປະທານ ໂຮ່ຈີມິນ ກ່ຽວກັບລັດຖະບານນິຕິທຳໄດ້ຖືກຢືນຢັນຕັ້ງແຕ່ເວລານັ້ນ: ອຳນາດການປະກາດລັດຖະທຳມະນູນເປັນ ຂອງປະຊາຊົນ; ເຄື່ອງຈັກ ຂອງລັດ ຕ້ອງເປັນເຄື່ອງມືໃນການປະຕິບັດຄວາມມຸ່ງມາດປາດຖະໜາ ຂອງປະຊາຊົນ; ບັນດາຂ້າລາຊະການ ແລະ ພະນັກງານ-ລັດຖະກອນບໍ່ຄວນເປັນ **“ເຈົ້າໜ້າທີ່ປະຕິວັດ”** ແຕ່ຕ້ອງເປັນ **“ຄົນຮັບໃຊ້ ຂອງປະຊາຊົນ”,** ຍຶດເອົາຄວາມສຸກ ຂອງປະຊາຊົນເປັນເປົ້າໝາຍຮັບໃຊ້. ກົດໝາຍບໍ່ແມ່ນເຄື່ອງມືໃນການລົງໂທດ ແຕ່ເປັນວິທີການໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ. ແນວຄິດສຳຄັນດັ່ງກ່າວນັ້ນ ພັກກອມມູນິດຫວຽດນາມ ໄດ້ສືບທອດ ແລະ ຄ່ອຍໆພັດທະນາໃຫ້ສົມບູນຂຶ້ນ. ໃນກອງປະຊຸມໃຫຍ່ ຄັ້ງທີ VII ຂອງພັກກອມມູນິດຫວຽດນາມ ປີ 1991 ແລະ ໂຄງການການເມືອງ ຂອງພັກ ກ່ຽວກັບການສ້າງສາປະເທດໃນໄລຍະຂ້າມຜ່ານກ້າວໄປສູ່ສັງຄົມນິຍົມ ໄດ້ກຳນົດເປັນຄັ້ງທຳອິດເຖິງຄຸນລັກສະນະພື້ນຖານ ຂອງລັດແຫ່ງກົດໝາຍສັງຄົມນິຍົມ: ອຳນາດ ຂອງລັດເປັນເອກະພາບ, ແຕ່ມີການແບ່ງງານຢ່າງຊັດເຈນ ລະຫວ່າງ ນິຕິບັນຍັດ, ບໍລິຫານ ແລະ ຕຸລາການ. ກອງປະຊຸມຜູ້ແທນທົ່ວປະເທດ ກາງສະໄໝ VII (1994) ໄດ້ກຳນົດເອົາໜ້າທີ່ສ້າງຕັ້ງລັດແຫ່ງກົດໝາຍສັງຄົມນິຍົມເຂົ້າໄປໃນເອກະສານ ຂອງພັກ. ກອງປະຊຸມໃຫຍ່ ຄັ້ງທີ IX, X, XI ຂອງພັກກອມມູນິດຫວຽດນາມ ໄດ້ສືບຕໍ່ຢືນຢັນ ແລະ ເພີ່ມເຕີມໃຫ້ສົມບູນຂຶ້ນ, ພ້ອມນັ້ນ ໃນໂຄງການການເມືອງ ຂອງພັກ ໄດ້ກຳນົດວ່າ: ລັດແຫ່ງກົດໝາຍສັງຄົມນິຍົມຫວຽດນາມ ແມ່ນລັດ ຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນ, ຢູ່ພາຍໃຕ້ການນຳພາຂອງພັກກອມມູນິດຫວຽດນາມ; ອຳນາດ ຂອງລັດ ເປັນເອກະພາບ, ແຕ່ມີການແບ່ງງານ ແລະ ການຄວບຄຸມລະຫວ່າງ 3 ອຳນາດ: ນິຕິບັນຍັດ, ບໍລິຫານ ແລະ ຕຸລາການ. ແນວທາງນີ້ໄດ້ຖືກປະຕິບັດໃນຮູບແບບຊັດເຈນຢູ່ໃນລັດຖະທຳມະນູນ 2013 ແລະ ບັນດາກົດໝາຍສາຄັນຫຼາຍສະບັບທີ່ກ່ຽວກັບການຈັດຕັ້ງກົງຈັກຂອງ

ລັດ. ກອງປະຊຸມໃຫຍ່ ຄັ້ງທີ XIII ຂອງພັກກອມມູນິດຫວຽດນາມ ໄດ້ສືບຕໍ່ຢືນຢັນວ່າ: ການສ້າງຕັ້ງ ແລະ ສໍາເລັດລັດແຫ່ງກົດໝາຍສັງຄົມນິຍົມຫວຽດນາມ ຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນ, ພາຍໃຕ້ການນໍາພາ ຂອງພັກ, ແມ່ນໜ້າທີ່ສໍາຄັນທີ່ສຸດໃນຂະບວນການປ່ຽນແປງໃໝ່ ຂອງລະບົບການເມືອງ.

ຂະບວນການກໍ່ສ້າງລັດແຫ່ງກົດໝາຍສັງຄົມນິຍົມຫວຽດນາມພາຍ ໃຕ້ການນໍາພາ ຂອງພັກ ໄດ້ບັນລຸຜົນສໍາເລັດທີ່ສໍາຄັນຢ່າງຫຼາຍ. ການຮັບຮູ້ທາງທິດສະດີ ນັບມື້ນັບຄົບຖ້ວນ ແລະ ເອກະພາບຫຼາຍຂຶ້ນ. ລະບົບກົດໝາຍ ໄດ້ຖືກສ້າງຂຶ້ນມາຢ່າງມີຄວາມຄົບຖ້ວນ ແລະ ເປັນເອກະພາບ, ຮັບປະກັນໃຫ້ສາມາດນໍາໃຊ້ໄດ້ໃນພາກປະຕິບັດ. ບົດບາດ ຂອງກົດໝາຍ ແລະ ການປະຕິບັດກົດໝາຍໄດ້ຮັບການໃຫ້ຄວາມສໍາຄັນໃນການເຄື່ອນໄຫວ ຂອງທົ່ວລະບົບການເມືອງ ແລະ ໃນຊີວິດສັງຄົມ.

ກົນໄກການແບ່ງງານ, ປະສານສົມທົບ ລະຫວ່າງ ບັນດາອົງການ ຂອງລັດ ໃນການປະຕິບັດ ອໍານາດນິຕິບັນຍັດ, ບໍລິຫານ ແລະ ຕຸລາການ ໄດ້ມີຄວາມຊັດເຈນ ແລະ ມີປະສິດທິຜົນເພີ່ມຂຶ້ນເລື້ອຍໆ. ກົງຈັກຂອງລັດ ໄດ້ຖືກຈັດຕັ້ງໃຫ້ກະທັດຮັດ, ການດໍາເນີນງານມີປະສິດພາບ ແລະ ປະສິດທິຜົນຫຼາຍຂຶ້ນ. ສະພາແຫ່ງຊາດໄດ້ສືບຕໍ່ປ່ຽນແປງວິທີການຈັດຕັ້ງ ແລະ ການດໍາເນີນງານ, ຍົກສູງຄຸນນະພາບການອອກນິຕິບັນຍັດ, ການກວດກາ ແລະ ການຕັດສິນໃຈ ກ່ຽວກັບບັນຫາສໍາຄັນ ຂອງປະເທດ. ລັດຖະບານໄດ້ເຮັດໜ້າທີ່ຢ່າງກະຕືລືລົ້ນ, ຮັບຜິດຊອບໃນການບໍລິຫານ, ສຸມໃສ່ການຄຸ້ມຄອງມະຫາພາກ, ປະຕິຮູບການບໍລິຫານ, ແກ້ໄຂຈຸດຕິດຂັດ ເພື່ອຮັບໃຊ້ການພັດທະນາປະເທດ. ການປະຕິຮູບຕຸລາການໄດ້ຖືກຜັກດັນໃຫ້ເຂັ້ມແຂງ; ບັນດາອົງການຕຸລາການໄດ້ຄ່ອຍໆສົມບູນດ້ານການຈັດຕັ້ງ, ຍົກສູງຄຸນນະພາບການດໍາເນີນງານ, ຮັບປະກັນຫຼັກນິຕິທໍາໃນການພິພາກສາ ແລະ ການດໍາເນີນຄວາມຍຸຕິທໍາ. ສິດທິມະນຸດ ແລະ ສິດພົນລະເມືອງໄດ້ຖືກບັນຍັດ ໃນລັດຖະທໍາມະນູນ ແລະ ຄ່ອຍໆປະກອບໃຫ້ເປັນຮູບປະທໍາທາງນິຕິກໍາ ແລະ ນໍາໃຊ້ຢ່າງມີປະສິດທິຜົນໃນພາກປະຕິບັດ. ປະຊາທິປະໄຕແບບຜູ້ແທນ ແລະ ປະຊາທິປະໄຕໂດຍກົງ ໄດ້ສືບຕໍ່ສົ່ງເສີມ. ແນວໂຮມປະເທດຫວຽດນາມ ແລະ ບັນດາອົງການການເມືອງສັງຄົມ ໄດ້ປ່ຽນແປງວິທີການດໍາເນີນງານເທື່ອລະກ້າວ, ປະກອບສ່ວນເຂົ້າໃນການປະຕິບັດສິດເປັນເຈົ້າຕົນເອງ ຂອງປະຊາຊົນ. ແບບແຜນ ຂອງລັດແຫ່ງກົດໝາຍສັງຄົມນິຍົມຫວຽດນາມ ພາຍໃຕ້ຫຼັກການ “ພັກນໍາພາ, ລັດບໍລິຫານ, ປະຊາຊົນເປັນເຈົ້າຕົນເອງ” ນັບມື້ນັບສົມບູນຂຶ້ນ, ກາຍເປັນພື້ນຖານໝັ້ນຄົງທີ່ມີສ່ວນຮ່ວມໃນຜົນສໍາເລັດອັນຍິ່ງໃຫຍ່ ແລະ ມີຄວາມໝາຍທາງປະຫວັດສາດໃນຂະບວນການປ່ຽນແປງໃໝ່, ການປົກປັກຮັກສາ ແລະ ສ້າງສາປະເທດສັງຄົມນິຍົມຫວຽດນາມ.

ຜົນສໍາເລັດທີ່ປະຊາຊົນຫວຽດນາມ ບັນລຸໄດ້ໃນຕະຫຼອດ 81 ປີ ຜ່ານມາ ແມ່ນມາການນໍາພາທີ່ຖືກຕ້ອງ ຂອງພັກກອມມູນິດຫວຽດນາມ, ຄວາມພະຍາຍາມ ຂອງທົ່ວລະບົບການເມືອງ, ການຊີ້ນໍາ ແລະ ບໍລິຫານຢ່າງທັນເວລາ, ເຂັ້ມງວດ ແລະ ໃກ້ຊິດ ຂອງລັດຖະບານ, ການກວດກາຢ່າງເຂັ້ມງວດ ຂອງສະພາແຫ່ງຊາດ ແລະ ຄວາມພະຍາຍາມ ຂອງທຸກຂັ້ນ, ທຸກພາກສ່ວນ, ທຸກທ້ອງຖິ່ນ, ຊຸມຊົນວິສາຫະກິດ ແລະ ປະຊາຊົນທັງພາຍໃນ ແລະ ຕ່າງປະເທດ.

ໃນປັດຈຸບັນ, ຕໍ່ການຮຽກຮ້ອງ ຂອງສະພາບການປະຕິວັດໃນໄລຍະໃໝ່, ພັກ ແລະ ລັດ ໄດ້ດໍາເນີນຢ່າງເຂັ້ມງວດ ແລະ ສໍາເລັດຜົນໃນການປັບປຸງກົງຈັກ ໃນລະດັບສູນກາງ ແລະ ທ້ອງຖິ່ນໃຫ້ກະທັດຮັດ, ໄດ້ໂຮມແຂວງຈໍານວນໜຶ່ງເຂົ້າກັນ ແລະ ປະຕິບັດແບບແຜນການປົກຄອງທ້ອງຖິ່ນ 2 ຂັ້ນ.

ພ້ອມກັນນັ້ນ, ຫວຽດນາມພວມສຸມໃສ່ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XIV ຂອງພັກກອມມູນິດຫວຽດນາມ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 2026-2030, ເຊິ່ງເປັນຂີດໝາຍສໍາຄັນໃນການກ້າວເຂົ້າໄປສູ່ຍຸກໃໝ່, ຍຸກແຫ່ງການບິນຕົວຂຶ້ນ, ພັດທະນາໃຫ້ຮັ່ງມີເຂັ້ມແຂງ. ໂດຍສຸມໃສ່ບັນລຸ 2 ເປົ້າໝາຍສໍາຄັນ: ຄົບຮອບ 100 ປີ ວັນສ້າງຕັ້ງພັກກອມມູນິດຫວຽດນາມ ໃນປີ 2030, ແລະ 100 ປີ ວັນສະຖາປະນາປະເທດ ໃນປີ 2045.

**III. ມູນເຊື້ອ, ຜົນງານ ຂອງການພົວພັນຮ່ວມມືແບບພິເສດ ລາວ-ຫວຽດນາມ ໃນຊຸມປີຜ່ານມາ ແລະ ບາງທິດທາງກ່ຽວກັບການພົວພັນຮ່ວມມື ລາວ-ຫວຽດນາມ ໃນໄລຍະຕໍ່ໜ້າ.**

**1. ມູນເຊື້ອການພົວພັນແບບພິເສດ ລາວ-ຫວຽດນາມ.**

ລາວ-ຫວຽດນາມ ແມ່ນປະເທດເພື່ອນບ້ານທີ່ມີທີ່ຕັ້ງພູມສັນຖານ-ຍຸດທະສາດສໍາຄັນ, ນອນຢູ່ໃນແຫຼມອິນດູຈີນ, ມີຄວາມຄ້າຍຄືກັນຫຼາຍດ້ານວັດທະນະທໍາ ແລະ ປະຫວັດສາດ, ມີຄວາມສໍາພັນມິດຕະພາບ ແລະ ການຮ່ວມມືທີ່ດີຢ່າງຕໍ່ເນື່ອງ, ໃຫ້ການຊ່ວຍເຫຼືອກັນຢ່າງຈິງໃຈມາຕະຫຼອດ ນັບທັງປະຫວັດສາດ ແລະ ໃນໄລຍະການປົກປັກຮັກສາ ແລະ ສ້າງສາປະເທດຊາດ ຂອງສອງຊາດ. ພັກປະຊາຊົນປະຕິວັດລາວ ແລະ ພັກກອມມູນິດຫວຽດນາມ ແມ່ນສອງພັກ ທີ່ມີຕົ້ນກໍາເນີດມາຈາກ ພັກກອມມູນິດອິນໂດຈີນ.

ໃນຊຸມປີຕົ້ນ ຂອງການຕໍ່ສູ້ຕ້ານການຮຸກຮານ ແລະ ການກົດຂີ່ ຂອງຈັກກະພັດລ່າເມືອງຂຶ້ນຝຣັ່ງ, ເຖິງວ່າບັນດາຂະບວນການຕໍ່ສູ້ທັງໝົດຈະຖືກພວກລ່າເມືອງຂຶ້ນກົດຂີ່ ແລະ ລົບລ້າງ, ແຕ່ປະຊາຊົນສອງປະເທດ ລາວ-ຫວຽດນາມ ກໍຍັງຄົງຄຽງບ່າຄຽງໄຫຼ່ກັນ, ນີ້ເປັນຫຼັກຖານຊັດເຈນວ່າ ການສ້າງຕັ້ງກອງກໍາລັງສາມັກຄີໃນການຕໍ່ສູ້ ແມ່ນຄວາມຕ້ອງການທີ່ເປັນຫຼັກວິຊາການ ແລະ ເປັນຄວາມຈໍາເປັນ ຂອງສອງຊາດ.

ໃນສະພາບການນັ້ນ, ປະທານ ໂຮ່ຈິມິນ ໄດ້ໝູນໃຊ້ຫຼັກການຂອງ ມາກ-ເລນິນ ຢ່າງມີຫົວຄິດປະດິດສ້າງກັບເງື່ອນໄຂສະເພາະ ຂອງຫວຽດນາມ ເພື່ອກໍານົດເສັ້ນທາງປົດປ່ອຍຊາດຫວຽດນາມໃນທິດທາງຂອງປະຕິວັດກໍາມະຊີບ. ການສ້າງຕັ້ງ ຂອງພັກກອມມູນິດອິນດູຈີນ ເຊິ່ງເປັນຕົ້ນກໍາເນີດ ຂອງພັກກອມມູນິດຫວຽດນາມ ແລະ ພັກປະຊາຊົນປະຕິວັດລາວ ໃນປັດຈຸບັນ ໄດ້ເປີດໜ້າປະຫວັດສາດອັນສະຫງ່າງາມ ຂອງຄວາມສໍາພັນພິເສດ ລາວ-ຫວຽດນາມ.

ການກໍາເນີດ ຂອງພັກກອມມູນິດອິນດູຈີນ ໃນປີ 1930 ກັບການກໍານົດເສັ້ນທາງປະຕິວັດຂອງກໍາມະຊີບໄດ້ເປີດໜ້າປະຫວັດສາດຄວາມສໍາພັນພິເສດ ລະຫວ່າງ ສອງຊາດ ລາວ-ຫວຽດນາມ ຢູ່ໃນນໍ້າໃຈສາກົນກໍາມະຊີບອັນບໍລິສຸດ. ນີ້ແມ່ນພື້ນຖານທີ່ໝັ້ນຄົງ ຂອງຄວາມສາມັກຄີແບບພິເສດ ລາວ-ຫວຽດນາມ ທີ່ປະທານ ໂຮ່ຈິມິນ ເຊິ່ງເປັນ “ສະຖາປະນິກຜູ້ຍິ່ງໃຫຍ່” ຂອງມິດຕະພາບແບບພິເສດເປັນຜູ້ສ້າງ. ປະທານ ໄກສອນ ພົມວິຫານ ເຄີຍຂຽນຢ່າງເຄົາລົບກ່ຽວກັບ ປະທານ ໂຮ່ຈິມິນ ວ່າ: “*ແນວຄິດ ແລະ ໄມຕີຈິດ ຂອງ*

*ປະທານ ໂຮ່ແມ່ນແສງສ່ອງທາງ, ແມ່ນແຫຼ່ງກະຕຸ້ນແຮງສາມັກຄີຕໍ່ສູ້ ຂອງປະຊາຊົນຊາວລາວ ຂອງພວກເຮົາ. ຕັ້ງແຕ່ມື້ທີ່ການປະຕິວັດລາວຍັງຢູ່ໃນໄຂ່ຈົນເຖິງເວລາທີ່ເຕີບໃຫຍ່, ປະທານ ໂຮ່ຈີມິນ ກໍ່ໄດ້ໃສ່ໃຈ ແລະ ຊີ້ນໍາໃຫ້ທິດເບືອງທາງ.*"

ໃນຂະບວນການຕໍ່ສູ້ຍາດເອົາເອກະລາດແຫ່ງຊາດ ແຕ່ປີ 1930-1945, ສອງປະເທດ ລາວ-ຫວຽດນາມ ມີເງື່ອນໄຂປະຫວັດສາດຄ້າຍຄືກັນ, ມີເປົ້າໝາຍ ແລະ ຄວາມປາດຖະໜາຮ່ວມກັນໃນການຍາດເອກະລາດ ແລະ ສິດເສລີ. ເສັ້ນທາງປົດປ່ອຍ ຂອງຊາດຫວຽດນາມ ຕາມເສັ້ນທາງປະຕິວັດກໍາມະຊີບກໍແມ່ນເສັ້ນທາງທີ່ເໝາະສົມໃນການປົດປ່ອຍຊາດລາວອອກຈາກພາວະຖືກກົດຂີ່. ເຊິ່ງປະຕິບັດຕາມຫຼັກການຈັດຕັ້ງ ແລະ ການດໍາເນີນງານ ຂອງພັກການເມືອງຕາມ ລັດທິມາກ-ເລນິນ, ການເກີດຂຶ້ນ ແລະ ການເຄື່ອນໄຫວ ຂອງພັກກອມມູນິດຫວຽດນາມ (ໃນນັ້ນ ມີບາງສ່ວນດໍາເນີນ ຢູ່ລາວ) ໄດ້ຖືກຜົນກະທົບຢ່າງແຮງ ແລະ ເປັນປັດໃຈກໍານົດການປ່ຽນແປງ ຂອງຂະບວນການປະຕິວັດລາວ. ໃນຂະບວນການຕໍ່ສູ້ ຂອງປະຊາຊົນລາວ, ມີລູກຫຼານຜູ້ດີເດັ່ນ ຂອງຊາວລາວຫຼາຍຄົນໄດ້ເຂົ້າເປັນສະມາຊິກ ຂອງພັກກອມມູນິດອິນໂດຈີນ. ນີ້ແມ່ນ "ເມັດພັນແດງ" ທີ່ວາງພື້ນຖານໃນການຂັບເຄື່ອນບັນຊາ ຂອງພັກກອມມູນິດອິນໂດຈີນ, ເພື່ອເປັນຜູ້ນໍາໂດຍກົງ ຂອງຂະບວນການປະຕິວັດລາວ.

ໃນການຕໍ່ສູ້ຕ້ານສັດຕູຜູ້ຮຸກຮານ ແຕ່ປີ 1945 ຫາ 1975, ຫຼັງຈາກໄດ້ຍາດເອົາອໍານາດການປົກຄອງ, ລັດຖະບານສອງປະເທດໄດ້ລົງນາມຂໍ້ຕົກລົງຊ່ວຍເຫຼືອ ລະຫວ່າງ ລາວ-ຫວຽດນາມ ແລະ ຂໍ້ຕົກລົງກ່ຽວກັບການຈັດຕັ້ງກອງທັບພັນທະມິດ ລາວ-ຫວຽດນາມ, ເພື່ອວາງພື້ນຖານດ້ານນິຕິກໍາເບື້ອງຕົ້ນໃຫ້ແກ່ການຮ່ວມມື, ການຊ່ວຍເຫຼືອ ແລະ ການເປັນພັນທະມິດໃນການຕໍ່ສູ້ກັບສັດຕູຮ່ວມ ຂອງສອງຊາດ. ດ້ວຍທັດສະນະ "ອິນໂດຈີນແມ່ນໜຶ່ງສະໜາມຮົບ", ໃນຊ່ວງສົງຄາມຕ້ານສັດຕູຮ່ວມ ຂອງປະຊາຊົນສອງປະເທດ ລາວ-ຫວຽດນາມ ແຕ່ປີ 1945-1975, ສອງປະເທດໄດ້ປະສານຮ່ວມມື, ສະໜັບສະໜູນ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ທັງເປັນການປະຕິບັດໜ້າທີ່ສາກົນອັນສູງສົ່ງ ແລະ ເພື່ອຜົນປະໂຫຍດ ຂອງແຕ່ລະປະເທດ.

ທັດສະນະຂອງປະທານ ໂຮ່ຈີມິນ ທີ່ວ່າ "ພວກເຮົາຖືຄວາມສຸກ ແລະ ຄວາມຮັ່ງມີ ຂອງອ້າຍນ້ອງລາວ ກໍຄື ຂອງຕົນເອງ" ພ້ອມດ້ວຍຫຼັກການ "ຊ່ວຍເພື່ອນ ກໍ່ຄືຊ່ວຍຕົນເອງ" ໄດ້ຖືກບັນດາຮຸ່ນການນໍາ ແລະ ປະຊາຊົນສອງປະເທດ ລາວ-ຫວຽດນາມ ຊຶມຊັບ ແລະ ສືບຕໍ່ສ່ອງສະຫວ່າງໃນຂະບວນການປະຫວັດສາດຂອງສອງຊາດ.

ເມື່ອຫວນຄືນເສັ້ນທາງປະຫວັດສາດທີ່ຜ່ານມາ, ປະຊາຊົນສອງປະເທດສາມາດພາກພູມໃຈໃນຂະບວນການກໍ່ສ້າງ ແລະ ພັດທະນາການພົວພັນແບບພິເສດ ແລະ ຫາຍາກທີ່ມີ ລະຫວ່າງ ສອງຊາດ. ໃນໄລຍະຕໍ່ສູ້ຕ້ານການປົກຄອງ ຂອງລັດທິລ່າເມືອງຂຶ້ນແບບເກົ່າ, ສອງປະເທດໄດ້ສ້າງຕັ້ງສໍາພັນສູ້ຮົບ ລາວ-ຫວຽດນາມ ເພື່ອຮ່ວມກັນຕ້ານສັດຕູຕົວດຽວກັນ. ບັນດາທະຫານອາສາສະໝັກຫວຽດນາມ ກຸ່ມທໍາອິດໄດ້ເດີນທາງເຂົ້າສູ່ລາວ ເພື່ອຄຽງບ່າຄຽງໄຫຼ່ກັບກອງກໍາລັງປະກອບອາວຸດປະເທດລາວ ໃນຂະບວນການຕໍ່ສູ້.

ການເສຍສະ ລະເລືອດເນື້ອ ແລະ ການປະສົມປະສານຢ່າງໃກ້ຊິດ ຂອງບັນດາລູກຫຼານທີ່ດີເດັ່ນ ຂອງສອງຊາດ ໄດ້ມີສ່ວນສຳຄັນໃນການນຳພາຂະບວນການຕໍ່ສູ້ ຂອງສອງປະເທດໄປສູ່ໄຊຊະນະອັນຍິ່ງໃຫຍ່, ໂດຍມີການລົງນາມ ສັນຍາເຊີແນວ 1954 ກ່ຽວກັບການຟື້ນຟູສັນຕິພາບໃນອິນໂດຈີນ.

ວັນທີ 05 ກັນຍາ 1962, ການທີ່ລັດຖະບານສະຫະພັນລາວ ໄດ້ສ້າງຕັ້ງສາຍພົວພັນທາງການທູດກັບຫວຽດນາມ ໄດ້ກາຍເປັນຈິດໝາຍສຳຄັນໃນປະຫວັດສາດການພົວພັນ ລາວ-ຫວຽດນາມ ໃນຍຸກສະໄໝໃໝ່. ປະທານ ໂຮ່ຈີມິນ ໄດ້ເນັ້ນຢ້ຳວ່າ ພື້ນຖານໃນການສ້າງຕັ້ງການພົວພັນເພື່ອນບ້ານໃກ້ເຮືອນຄຽງ ກັບລາວ ແມ່ນ 5 ຫຼັກການຢູ່ຮ່ວມກັນຢ່າງສັນຕິພາບ, ທີ່ບັນດາປະເທດໃນຂະບວນການ “ບໍ່ເຂົ້າຮ່ວມກຸ່ມ” ໄດ້ຮັບຮອງຢ່າງເປັນທາງການ ແລະ ຢືນຢັນໃນການປະຊຸມ “ບັນດຸງ” ປີ 1955. ທັນທີຫຼັງຈາກສ້າງຕັ້ງສາຍພົວພັນທາງການທູດກັບຫວຽດນາມ, ໃນກອງປະຊຸມກັບກອງທັບລາວ, ສະເດັດເຈົ້າ ສຸພານຸວົງ ໄດ້ກ່າວວ່າ: “ຫຼັງຈາກສ້າງຕັ້ງສາຍພົວພັນທາງການທູດກັບບັນດາປະເທດ, ພວກເຮົາມີເພື່ອນມິດເພີ່ມຂຶ້ນຫຼາຍ, ແຕ່ຄົນທີ່ເປັນເພື່ອນ ຮ່ວມເປັນ-ຮ່ວມຕາຍ, ຢູ່ຮ່ວມຊຸມຕະຄອງດຽວກັນ ມີພຽງແຕ່ຫວຽດນາມ.” ນັບແຕ່ນັ້ນມາ, ພາຍໃຕ້ການນຳພາ ຂອງສອງພັກ, ປະຊາຊົນສອງປະເທດ ລາວ-ຫວຽດນາມ ໄດ້ພະຍາຍາມຊ່ວຍເຫຼືອກັນຢ່າງເຕັມທີ່, ຢືນຄຽງຂ້າງກັນໃນຂະບວນການຕໍ່ສູ້ຕ້ານສັດຕູຄືດຽວ, ນຳພາເຮືອປະຕິວັດ ຂອງສອງຊາດໄປສູ່ໄຊຊະນະຢ່າງສົມບູນໃນປີ 1975.

ນັບແຕ່ຫຼັງປີ 1975, ໂດຍສະເພາະນັບແຕ່ວັນທີ 18 ກໍລະກົດ 1977 ທີ່ສອງປະເທດ ໄດ້ລົງນາມສົນທິສັນຍາມິດຕະພາບ ແລະ ການຮ່ວມມື, ການພົວພັນ ລະຫວ່າງ ລາວ-ຫວຽດນາມ ໄດ້ກ້າວເຂົ້າສູ່ໜ້າໃໝ່ຢ່າງເຕັມຮູບ: ຈາກການພົວພັນສູ້ຮົບຮ່ວມຊຸມຕະຄອງດຽວກັນ ກາຍເປັນການຮ່ວມມືຮອບດ້ານ ລະຫວ່າງສອງປະເທດ ທີ່ມີເອກະລາດແລະອະທິປະໄຕ. ພາຍໃຕ້ການນຳພາ ຂອງພັກປະຊາຊົນປະຕິວັດລາວ ແລະ ພັກກອມມູນິດຫວຽດນາມ, ປະຊາຊົນສອງປະເທດຍິ່ງມີເງື່ອນໄຂທີ່ຈະສືບຕໍ່ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມ ທີ່ເຄີຍຕິດພັນສະໜິດແໜ້ນໃນການຕໍ່ສູ້ຕ້ານຜູ້ຮຸກຮານ, ມາສູ່ການກໍ່ສ້າງ ແລະ ສົ່ງເສີມການຮ່ວມມືຮອບດ້ານກ່ຽວກັບການເມືອງ, ການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ, ເສດຖະກິດ, ວັດທະນະທຳ, ການສຶກສາ ແລະ ດ້ານອື່ນໆ. ນີ້ແມ່ນລັກສະນະສຳຄັນທີ່ສຸດນຳໄປສູ່ການປ່ຽນແປງໃນເນື້ອຫາ, ວິທີການ ແລະ ຫຼັກການການພົວພັນ ລະຫວ່າງ ສອງປະເທດ, ຍົກການພົວພັນມິດຕະພາບພິເສດ ແລະ ການຮ່ວມມືຮອບດ້ານ ຂອງສອງປະເທດ ຂຶ້ນລະດັບໃໝ່.

ເມື່ອເບິ່ງຄືນເສັ້ນທາງແຫ່ງການພັດທະນາການພົວພັນ ຂອງສອງປະເທດ ໃນໄລຍະຜ່ານມາ, ພວກເຮົາລ້ວນແຕ່ມີຄວາມພາກພູມໃຈ ເມື່ອເຫັນວ່າ ນ້ຳໃຈມິດຕະພາບພິເສດອັນຊື່ສັດ ແລະ ການຮ່ວມມືຮອບດ້ານ ຫວຽດ-ລາວ ໄດ້ຮັບໝາກຜົນ ແລະ ພວມປັບປຸງ, ປ່ຽນແປງໃໝ່ ແລະ ພັດທະນາໃຫ້ເລິກເຊິ່ງ, ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ເພື່ອການພັດທະນາຂອງແຕ່ລະປະເທດ. ແຕ່ລະບາດກ້າວ ຂອງສອງປະເທດ ແລະ ສອງຊາດໃນມື້ນີ້ ລ້ວນແຕ່ສະທ້ອນໃຫ້ເຫັນການ

ປະກອບສ່ວນຢ່າງຕັ້ງໜ້າ ຂອງທັງສອງຝ່າຍ, ເຮັດໃຫ້ການພົວພັນພິເສດ ຫວຽດ-ລາວ ນັບມື້ນັບສະໜິດແໜ້ນ, ໝັ້ນຄົງ ແລະ ເກີດດອກອອກຜົນຢ່າງບໍ່ຢຸດຢັ້ງ.

**2. ຜົນງານການຮ່ວມມືຮອບດ້ານ ລາວ-ຫວຽດນາມ ໃນຊຸມປີຜ່ານມາ.**

ການຮ່ວມມື ລະຫວ່າງ ສອງພັກ ແລະ ສອງປະເທດໃນຊຸມປີຜ່ານມາ ໄດ້ບັນລຸຜົນສຳເລັດອັນໃຫຍ່ຫຼວງ. ເນື້ອໃນການຮ່ວມມືນັບມື້ນັບມີຄວາມໝາຍ, ເລິກເຊິ່ງ, ມີປະສິດທິຜົນຫຼາຍຂຶ້ນ, ພ້ອມກັນນັ້ນກໍ່ໄດ້ພັດທະນາຢ່າງຮອບດ້ານໃນທຸກຂະແໜງ. ພວກເຮົາມີຄວາມຍິນດີທີ່ເຫັນວ່າການພົວພັນດ້ານການເມືອງທີ່ໄວ້ໃຈກັນ ໄດ້ຖືກສ້າງຄວາມໝັ້ນຄົງຂຶ້ນຢ່າງເຂັ້ມແຂງ ແລະ ເປັນພາກສ່ວນຫຼັກແຫຼ່ງກຳນົດທິດໃນການພົວພັນຮ່ວມມືຮອບດ້ານ ລາວ-ຫວຽດນາມ. ການຮ່ວມມືດ້ານການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ ໄດ້ຮັບການເພີ່ມທະວີ, ນັບມື້ນັບໜັກແໜ້ນແຟ້ນ ແລະ ເຂົ້າສູ່ເນື້ອໃນກາຍເປັນເສົາຄ້ຳໃນການພົວພັນ ຂອງສອງປະເທດ. ການຮ່ວມມືດ້ານເສດຖະກິດ, ການຄ້າ ແລະ ການລົງທຶນ ໄດ້ມີການປ່ຽນແປງຢ່າງຕັ້ງໜ້າ ແລະ ກາຍເປັນພື້ນຖານທີ່ໝັ້ນຄົງໃນການພົວພັນ ຂອງສອງປະເທດ. ການຮ່ວມມືດ້ານການສຶກສາ, ວັດທະນະທຳ, ຂ່າວສານ, ກິລາ ແລະ ສາທາລະນະສຸກ ກໍ່ກຳລັງພັດທະນາຢ່າງຕັ້ງໜ້າທີ່ສຸດ.

ໃນດ້ານການຕ່າງປະເທດ, ຄວາມສະໜິດສະໜົມ ແລະ ການຊ່ວຍເຫຼືອກັນໃນເວທີສາກົນ ໄດ້ປະກອບສ່ວນໃນການຍົກສູງຖານະບົດບາດ ຂອງລາວ ແລະ ຫວຽດນາມ ທັງໃນພາກພື້ນ ແລະ ສາກົນ, ພ້ອມທັງປະກອບສ່ວນຮ່ວມໃນການສ້າງສັນຕິພາບ, ປ້ອງກັນຄວາມສະຫງົບ ແລະ ສະຖຽນລະພາບໃນການຮ່ວມມືພັດທະນາ ໃນພາກພື້ນອາຊີຕາເວັນອອກສຽງໃຕ້ ແລະ ໃນໂລກ.

**3. ທິດທາງການຮ່ວມມື ລະຫວ່າງ ສອງປະເທດໃນຕໍ່ໜ້າ.**

ເພື່ອຮັບປະກັນການພັດທະນາ ຂອງແຕ່ລະປະເທດ, ສອງປະເທດຕ້ອງສືບຕໍ່ຢືນຢັນລະດັບຄວາມສຳຄັນ ແລະ ມີຄວາມໝາຍດ້ານຍຸດທະສາດຂອງການພົວພັນສາມັກຄີແບບພິເສດ ລາວ-ຫວຽດນາມ ໃນສະພາບການໃໝ່, ບົນພື້ນຖານຄວາມສອດຄ່ອງ ຂອງຫຼັກການ ແລະ ຖະແຫຼງການຮ່ວມທີ່ສອງຝ່າຍໄດ້ຕົກລົງເຫັນດີ, ບົນພື້ນຖານການເຄົາລົບເອກະລາດ ແລະ ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ຂອງກັນ ແລະກັນ, ບໍ່ແຊກແຊງກິດຈະການພາຍໃນ ຂອງກັນ ແລະ ກັນ; ສິ່ງເສີມນ້ຳໃຈເອກະລາດ, ເພິ່ງພາຕົນເອງ ແລະ ເປັນເຈົ້າຕົນເອງ; ຮ່ວມມືຢ່າງເທົ່າທຽມ, ຕ່າງຝ່າຍຕ່າງມີຜົນປະໂຫຍດ; ໄວ້ໃຈກັນ, ສະໜັບສະໜູນກັນ ແລະ ສ້າງເງື່ອນໄຂໃຫ້ກັນພັດທະນາ, ປະສົມປະສານຢ່າງເໝາະສົມ ລະຫວ່າງ ລັກສະນະ ຂອງການພົວພັນ ລາວ-ຫວຽດນາມ ກັບທຳນຽມສາກົນສາກົນ ເພື່ອຄວາມຮັ່ງມີ ຂອງແຕ່ລະປະເທດ, ເພື່ອສັນຕິພາບ, ຄວາມໝັ້ນຄົງ ແລະ ຮ່ວມມືພັດທະນາໃນພາກພື້ນ ແລະ ໃນໂລກ. ດັ່ງນັ້ນ, ການພົວພັນຮ່ວມມື ລາວ-ຫວຽດນາມ ໃນໄລຍະຕໍ່ໜ້າ ຈະຕ້ອງສຸມໃສ່ບາງເນື້ອໃນສຳຄັນ ດັ່ງນີ້:

**ໜຶ່ງ:** ສືບຕໍ່ເພີ່ມທະວີການພົວພັນດ້ານການເມືອງ ລະຫວ່າງ ສອງປະເທດໃຫ້ເຂົ້າສູ່ລວງເລິກ, ໃກ້ຊິດ ແລະ ໄວ້ໃຈກັນ, ຫັນເປັນພື້ນຖານ, ເປັນພາກສ່ວນຫຼັກແຫຼ່ງ ແລະ ຊີ້ນຳການພົວພັນຮ່ວມມືທັງໝົດ ຂອງ

ສອງປະເທດ ຄື: (1), ປັບປຸງ ແລະ ເພີ່ມທະວີຄວາມເຂົ້າໃຈຮ່ວມກັນຢ່າງໝັ້ນຄົງ ຮັບຮູ້ກ່ຽວກັບລະດັບຄວາມສໍາຄັນ ຂອງການພົວພັນສາມັກຄີແບບພິເສດ ລາວ-ຫວຽດນາມ, ຖືນີ້ເປັນພາລະກິດດ້ານຍຸດທະສາດທີ່ມີຄວາມໝາຍຕັດສິນການຄົງຕົວ ຕໍ່ຄວາມສະຫງົບ, ການພັດທະນາ ຂອງແຕ່ລະປະເທດ ແລະ ປະຊາຊົນສອງຝ່າຍ, ເພື່ອສັນຕິພາບ, ສະຖຽນລະພາບ, ການຮ່ວມມື ແລະ ການພັດທະນາໃນພາກພື້ນ ແລະໃນໂລກ; (2), ຮັກສາ, ແລກປ່ຽນການເດີນທາງຢ້ຽມຢາມ ຂອງການນໍາຂັ້ນສູງ ຂອງສອງພັກ ແລະ ສອງປະເທດ ເພື່ອເພີ່ມທະວີຄວາມຮັບຮູ້, ຄວາມໄວ້ເນື້ອເຊື່ອໃຈ ແລະ ສ້າງກໍາລັງໜູນໃນການຮ່ວມມືທຸກດ້ານ; (3), ເພີ່ມທະວີການແລກປ່ຽນຂໍ້ມູນກ່ຽວກັບທິດສະດີ, ພຶດຕິກໍາຈິງ ແລະ ບົດຮຽນໃນການກໍ່ສ້າງພັກ, ການສ້າງລະບົບການເມືອງທີ່ກະທັດຮັດ, ມີປະສິດທິຜົນ, ການພັດທະນາເສດຖະກິດ-ສັງຄົມ, ການຮັບປະກັນເສດຖະກິດມະຫາພາກ, ເປີດກວ້າງການພົວພັນ ແລະ ການເຊື່ອມໂຍງກັບສາກົນ, ພ້ອມກັບບັນດາບັນຫາໃໝ່ຫຼັງກອງປະຊຸມໃຫຍ່ຂອງພັກ; (4), ຍູ້ແຮງການໂຄສະນາ ແລະ ເຜີຍແຜ່ ກ່ຽວກັບການພົວພັນ ລາວ-ຫວຽດນາມ ລວມທັງການພົວພັນ ລະຫວ່າງ ສາມປະເທດ ລາວ-ຫວຽດນາມ-ກໍາປູເຈຍ, ຕໍ່ຕ້ານບັນດາຖ້ອຍທໍານອງບິດເບືອນ, ຕ້ານ ແລະ ທໍາລາຍ ຂອງອິດທິກໍາລັງປໍລະປັກ ແລະ (5), ປະສານສົມທົບກັນ ຈັດຕັ້ງການເຄື່ອນໄຫວສະເຫຼີມສະຫຼອງ ແລະ ວັນສໍາຄັນ ຂອງສອງປະເທດ ເພື່ອໂຄສະນາໃຫ້ປະຊາຊົນສອງປະເທດຮັບຮູ້, ເຂົ້າໃຈຢ່າງກວ້າງຂວາງ, ໂດຍສະເພາະ ຊ່ວຍໃຫ້ຄົນລຸ້ນໜຸ່ມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບການພົວພັນສະໜິດແໜ້ນ ລາວ-ຫວຽດນາມ ແນໃສ່ຮັກສາ ແລະ ເສີມຂະຫຍາຍການພົວພັນພິເສດນີ້ໃຫ້ຄົງຢູ່ຊົ່ວກະລະນານ.

**ສອງ**: ເພີ່ມທະວີການຮ່ວມມືໃນເສົາຄໍ້າດ້ານ ປກສ-ປກຊ, ປະສານສົມທົບຢ່າງໃກ້ຊິດ, ຮັບປະກັນການຮັກສາຄວາມໝັ້ນຄົງທາງການເມືອງ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພສັງຄົມ ໃນແຕ່ລະປະເທດ. ຈັດຕັ້ງປະຕິບັດອະນຸສັນຍາ ກ່ຽວກັບການຮ່ວມມືດ້ານ ປກສ-ປກຊ ແລະ ແຜນການຮ່ວມມືປະຈໍາປີ ລະຫວ່າງ ສອງກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບໃຫ້ມີປະສິດທິຜົນສູງ. ຍູ້ແຮງການຮ່ວມມືໃນການຮັກສາຄວາມສະຫງົບ, ການກໍ່ສ້າງເສັ້ນຊາຍແດນ ລາວ-ຫວຽດນາມ ໃຫ້ກາຍເປັນເສັ້ນຊາຍແດນສັນຕິພາບ, ສະຖຽນລະພາບ ແລະ ພັດທະນາແບບຍືນຍົງ; ເພີ່ມທະວີການແລກປ່ຽນຂໍ້ມູນ, ປະສານສົມທົບຢ່າງໃກ້ຊິດໃນການຕໍ່ຕ້ານ ແລະ ປ້ອງກັນ “ການຫັນປ່ຽນໂດຍສັນຕິ”, ການປະຕິວັດສີ, ການປ້ອງກັນ ແລະ ຕໍ່ສູ້ຢ່າງມີປະສິດທິຜົນກັບບັນດາອາຊະຍາກໍາຂ້າມຊາດ, ໂດຍສະເພາະ ການລັກລອບ ແລະ ການຂົນສິ່ງສານເສບຕິດ.

**ສາມ:** ເສີມຂະຫຍາຍຄວາມສາມາດບົ່ມຊ້ອນ ແລະ ທ່າແຮງ ຂອງແຕ່ລະປະເທດ, ບົນຫຼັກການຄວາມເທົ່າທຽມ, ຕ່າງຝ່າຍຕ່າງມີຜົນປະໂຫຍດ, ປະຕິບັດຕາມກົດໝາຍ ຂອງລາວ ແລະ ຫວຽດນາມ; ພະຍາຍາມຊຸກຍູ້ສ້າງບາດກ້າວບຸກທະລຸໃນການຍົກສູງຄຸນນະພາບ ແລະ ປະສິດທິຜົນ ຂອງການຮ່ວມມືດ້ານເສດຖະກິດ, ວັດທະນະທໍາ, ສາທາລະນະສຸກ ແລະ ວິທະຍາສາດ-ເຕັກນິກ; ສ້າງການປ່ຽນແປງຢ່າງເຂັ້ມແຂງ

ໃຫ້ເໝາະສົມກັບການພົວພັນທາງດ້ານການເມືອງທີ່ມີມູນເຊື້ອ ລະຫວ່າງ ສອງປະເທດ, ຖືເປັນພື້ນຖານ ແລະ ເປັນຕົວປະສານໃນການພພົວພັນໃຫ້ໝັ້ນຄົງ ຂອງສອງປະເທດ.

ສອງຝ່າຍຕ້ອງດຳເນີນການປະຕິບັດໃຫ້ມີປະສິດທິຜົນ ຕາມຂໍ້ຕົກລົງຍຸດທະສາດການຮ່ວມມື ລາວ-ຫວຽດນາມ ໄລຍະ 2021-2030; ແຜນການຮ່ວມມືປະຈຳປີ ລະຫວ່າງ ສອງລັດຖະບານ; ສືບຕໍ່ປ່ຽນແປງໃໝ່ຢ່າງເລິກເຊິ່ງ ແລະ ຍົກສູງປະສິດທິຜົນ ຂອງບັນດາກົນໄກການຮ່ວມມື ລະຫວ່າງ ສອງປະເທດ, ເປັນຕົ້ນໃນດ້ານເສດຖະກິດ ໃຫ້ສອດຄ່ອງກັບທ່າແຮງ ແລະ ສິດປະໂຫຍດ... ດ້ານເສດຖະກິດ ໃຫ້ສອດຄ່ອງກັບທຳນຽມສາກົນ, ແຕ່ກໍ່ຕ້ອງມີການໃຫ້ຄວາມສຳຄັນ ແລະ ສິດປະໂຫຍດພິເສດໃຫ້ສົມກັບລັກສະນະການພົວພັນແບບພິເສດ. ເພີ່ມທະວີຄວາມເຊື່ອມໂຍງ ລະຫວ່າງ ສອງພື້ນຖານເສດຖະກິດ ເປັນຕົ້ນ ໃນດ້ານສ້າງພື້ນຖານໂຄງລ່າງ, ການຂົນສົ່ງ, ພະລັງງານ, ການສື່ສານ ແລະ ການທ່ອງທ່ຽວ; ກຳນົດນະໂຍບາຍສົ່ງເສີມ ແລະ ສິດປະໂຫຍດ ເພື່ອກະຕຸ້ນວິສາຫະກິດສອງຝ່າຍໃຫ້ລົງທຶນໃນຂະແໜງທີ່ມີຄວາມສາມາດບົ່ມຊ້ອນ ແລະ ທ່າແຮງ, ໂດຍສະເພາະ ໃນດ້ານກະສິກຳເຕັກໂນໂລຊີສູງ. ຜັນຂະຫຍາຍການປະຕິບັດໃຫ້ສອດຄ່ອງໃນທຸກມາດຕະການ ເພື່ອເພີ່ມມູນຄ່າການຄ້າສອງຝ່າຍ ໃຫ້ບັນລຸ 5 ຕື້ໂດລາ ແລະ ການລົງທຶນ ຂອງຫວຽດນາມໃນລາວໃຫ້ບັນລຸ 10 ຕື້ໂດລາໃນຕໍ່ໜ້າ.

ສືບຕໍ່ປັບປຸງໃໝ່, ຍົກສູງຄຸນນະພາບ ແລະ ປະສິດທິຜົນ ໃນການຝຶກອົບຮົມ ແລະ ພັດທະນາບຸກຄະລາກອນ, ນັກຮຽນ ຂອງແຕ່ລະປະເທດ; ໂດຍເນັ້ນການຈັດຫ້ອງຮຽນຝຶກອົບຮົມໃຫ້ແກ່ຄະນະນຳ ແລະ ນັກບໍລິຫານທຸກລະດັບ ຂອງລາວ, ຖືເປັນພາລະກິດຍຸດທະສາດທີ່ມີຄວາມສຳຄັນສູງສຸດ ແລະ ຍາວນານ ຂອງສອງປະເທດ.

**ສີ່:** ເພີ່ມທະວີການແລກປ່ຽນຂໍ້ມູນ ແລະ ປະສານສົມທົບຢ່າງໃກ້ຊິດ ລະຫວ່າງ ສອງພັກ ແລະ ສອງລັດຖະບານ ໃນບັນດາເວທີສາກົນ, ພາກພື້ນ ແລະ ບັນດາກົນໄກການຮ່ວມມືໃນພາກພື້ນແມ່ນ້ຳຂອງ; ສືບຕໍ່ປະຕິບັດໃຫ້ມີປະສິດທິຜົນກົນໄກການປຶກສາຫາລືປະຈຳປີ ລະຫວ່າງ ບັນດາອົງການທີ່ຮັບຜິດຊອບວຽກງານດ້ານການຕ່າງປະເທດ.

**ຫ້າ:** ສືບຕໍ່ສົ່ງເສີມຜົນສຳເລັດ ຂອງກົນໄກການຮ່ວມມື ລະຫວ່າງ ບັນດາອົງການສູນກາງ ຂອງສອງພັກ, ບັນດາກະຊວງ ແລະ ພາກສ່ວນ ຂອງລັດຖະບານ, ແນວໂຮມແຫ່ງຊາດ, ອົງການມະຫາຊົນ ແລະ ອົງການປະຊາຊົນ, ບັນດາແຂວງ ທີ່ມີເຂດຊາຍແດນຕິດຈອດກັນ, ເພີ່ມທະວີການແລກປ່ຽນຂໍ້ມູນ, ແບ່ງປັນປະສົບການ ແລະ ຊ່ວຍເຫຼືອ ເຊິ່ງກັນ ແລະ ກັນ ໃຫ້ພັດທະນາຮ່ວມກັນ.

---------------------